
ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດໃນເຄືອ

pwc

ເອກະສານລາຍງານການເງິນລວມກິດຈະການ

31 ທັນວາ 2024



www.pwc.com/la

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດໃນເຄືອ

ເອກະສານລາຍງານການເງິນລວມກິດຈະການ
31 ທັນວາ 2024

ສາລະບານ	**ໜ້າ**
ບົດລາຍງານຂອງຜູ້ກວດສອບອິດສະຫຼະ	1 - 5
ໃບລາຍງານຖານະການເງິນລວມກິດຈະການ	6 - 7
ໃບລາຍງານຜົນໄດ້ຮັບລວມກິດຈະການ	8
ໃບລາຍງານສ່ວນປ່ຽນແປງທຶນລວມກິດຈະການ	9
ໃບລາຍງານກະແສເງິນສົດລວມກິດຈະການ	10 - 11
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ	12 - 33

ບົດລາຍງານຂອງຜູ້ກວດສອບອິດສະຫຼະ

ເຖິງ: ສະພາຜູ້ອຳນວຍການ ແລະ ຜູ້ຖືຮຸ້ນ ຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ຄຳເຫັນຂອງພວກເຮົາ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນລວມກິດຈະການຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ບໍລິສັດ) ແລະ ບໍລິສັດໃນເຄືອ (ກຸ່ມບໍລິສັດ) ວັນທີ 31 ທັນວາ 2024 ໄດ້ຖືກສ້າງຂຶ້ນຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ເຊິ່ງອະທິບາຍໃນບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານການເງິນລວມກິດຈະການສະບັບນີ້.

ການກວດສອບຂອງພວກເຮົາມີດັ່ງນີ້:

ເອກະສານລາຍງານການເງິນລວມກິດຈະການ ປະກອບດ້ວຍ:

- ໃບລາຍງານຖານະການເງິນລວມກິດຈະການ ວັນທີ 31 ທັນວາ 2024
- ໃບລາຍງານຜົນໄດ້ຮັບລວມກິດຈະການສຳລັບທ້າຍປີ
- ໃບລາຍງານສ່ວນປ່ຽນແປງທຶນລວມກິດຈະການສຳລັບທ້າຍປີ
- ໃບລາຍງານກະແສເງິນສົດລວມກິດຈະການສຳລັບທ້າຍປີ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ, ເຊິ່ງລວມມີນະໂຍບາຍການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ

ພື້ນຖານໃນການອອກຄຳເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານການກວດສອບສາກົນໄດ້ລະບຸໄວ້ໃນຂໍ້ *ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນລວມກິດຈະການ* ບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າພວກເຮົາໄດ້ຮັບຫຼັກຖານການກວດສອບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄຳເຫັນຂອງພວກເຮົາ.

ຄວາມເປັນອິດສະຫຼະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກກຸ່ມບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ເລື່ອງທີ່ເນັ້ນໜັກ - ພື້ນຖານ ການບັນຊີ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນລວມກິດຈະການ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການບັນຊີ. ເອກະສານລາຍງານການເງິນລວມກິດຈະການໄດ້ຖືກກະກຽມຕາມນະໂຍບາຍການບັນຊີຂອງກຸ່ມບໍລິສັດ ເຊິ່ງ ອາດຈະແຕກຕ່າງຈາກມາດຕະຖານການລາຍງານການເງິນສາກົນ (IFRS). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນລວມກິດຈະການນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນລວມກິດຈະການ ແລະ ຜົນການດຳເນີນງານລວມກິດຈະການ ແລະ ກະແສເງິນສົດລວມກິດຈະການຕາມ IFRS. ທັ້ງນີ້ຄວາມເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

pwc

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ແມ່ນ ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນລວມກິດຈະການສຳລັບປີປັດຈຸບັນ. ພວກເຮົາກຳນົດ ເລື່ອງການກວດສອບທີ່ສຳຄັນ: ການຮັບຮູ້ລາຍຮັບ. ພວກເຮົາໄດ້ນຳເນື້ອໃນສຳຄັນເຫຼົ່ານີ້ມາລວມໃນການກວດສອບເອກະສານລາຍງານການເງິນລວມກິດຈະການ ເພື່ອສະແດງຄຳເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄຳເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ການຮັບຮູ້ລາຍຮັບ ອີງຕາມບົດອະທິບາຍຂໍ້ທີ 2.14 "ນະໂຍບາຍການບັນຊີ - ການຮັບຮູ້ລາຍຮັບ" ແລະ ບົດອະທິບາຍຂໍ້ທີ 18 "ລາຍຮັບ" ໃນເອກະສານລາຍງານການເງິນລວມກິດຈະການ. ລາຍຮັບຂອງ ກຸ່ມບໍລິສັດ ປະກອບດ້ວຍ ລາຍຮັບຈາກ ການຂາຍຍົກ ແລະ ຂາຍຍ່ອຍ ນ້ຳມັນເຊື້ອໄຟ ແລະ ນ້ຳມັນເຄື່ອງ ເຊິ່ງຂາຍຍົກເປັນສ່ວນໃຫຍ່. ໄລຍະເວລາທີ່ແຕກຕ່າງ ແລະ ເງື່ອນໄຂການຂາຍຍົກຂອງ ກຸ່ມບໍລິສັດ ແມ່ນມີຜົນກະທົບທາງກົງ ຕໍ່ຄວາມຖືກຕ້ອງຂອງການບັນທຶກລາຍຮັບ. ໄລຍະເວລາໃນຂະບວນການອອກໃບຮຽກເກັບເງິນ ແລະ ຂະບວນການຂົນສົ່ງ ອາດເຮັດໃຫ້ເກີດຄວາມສ່ຽງສູງໃນຄວາມຄົບຖ້ວນ ແລະ ສະສາງບັນຊີ ໂດຍສະເພາະ ລາຍຮັບຈາກການຂາຍຍົກນ້ຳມັນ ເຊິ່ງມີການບັນທຶກລາຍຮັບແຕກຕ່າງຈາກໄລຍະເວລາຂອງການສົ່ງມອບ ເຊິ່ງມີຜົນກະທົບຕໍ່ການຮັບຮູ້ລາຍຮັບໃຫ້ຖືກຕາມປີການບັນຊີ. ພວກເຮົາໃຫ້ຄວາມສຳຄັນໃນເລື່ອງນີ້ ອັນເນື່ອງມາຈາກຮອບວຽນການອອກໃບຮຽກເກັບເງິນທີ່ອາດຈະບໍ່ກົງກັບມື້ປິດບັນຊີທ້າຍປີສະເໜີໄປ ດັ່ງນັ້ນການຮັບຮູ້ລາຍຮັບຈຶ່ງຕ້ອງອີງຕາມການປະເມີນຂອງ ຜູ້ບໍລິຫານ.	ພວກເຮົາປະຕິບັດຕາມຂັ້ນຕອນການກວດສອບດັ່ງຕໍ່ໄປນີ້: • ປະເມີນ ແລະ ກວດກາ ລະບົບການຄວບຄຸມ ທີ່ກ່ຽວຂ້ອງ ສຳລັບຂັ້ນຕອນ ການຮັບຮູ້ລາຍຮັບ. ເພື່ອໃຫ້ໄດ້ຄວາມໝັ້ນໃຈວ່າ ການອອກໃບບິນ ແລະ ລະບົບການເຮັດວຽກຕ່າງໆມີຄວາມໜ້າເຊື່ອຖື ແລະ ການປ່ຽນແປງລະບົບການຄວບຄຸມ ແມ່ນສອດຄ່ອງກັບລະບົບທີ່ກ່ຽວຂ້ອງ. • ກວດກາໃບຮຽກເກັບເງິນຂອງລູກຄ້າລາຍບຸກຄົນ ແລະ ບໍລິສັດ ທຽບໃສ່ການອະນຸມັດ ແລະ ກວດກາກ່ອນທີ່ຈະບັນທຶກໃນບັນຊີແຍກປະເພດທົ່ວໄປ ແລະ ໃບຮັບເງິນສົດ. • ກວດກາກຸ່ມຕົວຢ່າງການກະທົບຍອດລະຫວ່າງ ບົດລາຍການຂາຍ ແລະ ບັນຊີໃຫຍ່ແຍກປະເພດ ເຊິ່ງລວມເຖິງການກວດສອບຂັ້ນຕອນການບັນທຶກລາຍການປັບປຸງ ໂດຍການສົມທຽບກັບເອກະສານທີ່ກ່ຽວຂ້ອງຂອງລາຍຮັບ. • ກວດກາລາຍລະອຽດຂອງການສະສາງລາຍຮັບໂດຍເລືອກກຸ່ມຕົວຢ່າງ ກ່ອນ ແລະ ຫຼັງ ປີປິດບັນຊີ ເພື່ອກວດກາວ່າລາຍການດັ່ງກ່າວຖືກບັນທຶກຢ່າງຄົບຖ້ວນໃນເວລາທີ່ເໝາະສົມ ຕາມຂໍ້ກຳນົດ ແລະ ເງື່ອນໄຂທີ່ກຳນົດໄວ້ໃນໃບແຈ້ງໜີ້ ແລະ ເອກະສານການສົ່ງມອບ. • ກວດກາກຸ່ມຕົວຢ່າງລາຍການບັນທຶກບັນຊີ ຂອງລາຍຮັບແຕ່ລະປະເພດ ທີ່ເກີດຂຶ້ນພາຍໃນປີ ໂດຍການສົມທຽບລາຍການບັນທຶກບັນຊີກັບໃບຮຽກເກັບເງິນ ແລະ ເອກະສານທີ່ກ່ຽວຂ້ອງຕ່າງໆ. ຈາກຜົນຂອງການກວດສອບເຫຼົ່ານີ້ ພວກເຮົາພົບວ່າ ການປະເມີນຂອງຜູ້ບໍລິຫານ ສຳລັບການຮັບຮູ້ລາຍຮັບ ແມ່ນໄດ້ບັນທຶກບັນຊີຢ່າງເໝາະສົມ, ສອດຄ່ອງກັບນະໂຍບາຍການບັນຊີ ແລະ ເອກະສານທີ່ມີ.

ຂໍ້ມູນອື່ນ

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນບົດລາຍງານປະຈຳປີ ແຕ່ບໍ່ລວມເຖິງເອກະສານລາຍງານການເງິນລວມກິດຈະການ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນບົດລາຍງານນັ້ນ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນລວມກິດຈະການບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ເພື່ອໃຫ້ສອດຄ່ອງກັບການກວດສອບ ຂອງພວກເຮົາຕໍ່ກັບເອກະສານລາຍງານການເງິນລວມກິດຈະການ, ຄວາມຮັບຜິດຊອບຂອງພວກເຮົາ ຄື ການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນມີຄວາມຂັດແຍ່ງທີ່ເປັນສາລະສຳຄັນ ກັບເອກະສານລາຍງານການເງິນລວມກິດຈະການ ຫຼື ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່. ຫາກໃນການປະຕິບັດງານດັ່ງກ່າວ ພວກເຮົາສະຫຼຸບໄດ້ວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງ ພວກເຮົາຕ້ອງໄດ້ລາຍງານຕາມຄວາມເປັນຈິງ ຢ່າງໃດກໍຕາມ, ພວກເຮົາບໍ່ພົບວ່າມີເລື່ອງດັ່ງກ່າວທີ່ຕ້ອງລາຍງານ.

ຄວາມຮັບຜິດຊອບຂອງຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນລວມກິດຈະການ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນລວມກິດຈະການ ໂດຍສອດຄ່ອງກັນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນລວມກິດຈະການນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນລວມກິດຈະການ ທີ່ປາສະຈາກການລາຍງານບໍ່ຖືກຕ້ອງອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນລວມກິດຈະການ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງກຸ່ມບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບ ກິດຈະການ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບ ໄດ້ຊ່ວຍຜູ້ອຳນວຍການ ໃນເລື່ອງຄວາມຮັບຜິດຊອບ ຂອງພວກເຂົາຕໍ່ກັບຂັ້ນຕອນໃນການກະກຽມການລາຍງານການເງິນຂອງກຸ່ມບໍລິສັດ

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນລວມກິດຈະການ

ວັດຖຸປະສົງ ຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນລວມກິດຈະການປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ. ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ການອອກບົດລາຍງານດ້ານການກວດສອບເຊິ່ງລວມທັ້ງການອອກຄຳເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອ ໝັ້ນໃນລະດັບສູງເຊິ່ງບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ. ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ພິຈາລະນາວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນລວມກິດຈະການເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີ ຕະຫຼອດການກວດສອບ. ການດຳເນີນງານຂອງພວກເຮົາລວມມີ:

- ລະບຸ ແລະ ປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນລວມກິດຈະການ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ວາງແຜນ ແລະ ດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫາຫຼັກຖານທີ່ ພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດຢ່າງເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ເໝາະສົມກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງກຸ່ມບໍລິສັດ.

- ປະເມີນຄວາມເໝາະສົມຂອງການນຳໃຊ້ວິທີການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.

- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີ ສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈເຮັດໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງກຸ່ມບໍລິສັດ ຫຼືບໍ່. ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບ ຂອງພວກເຮົາກັບຂໍ້ມູນທີ່ກ່ຽວຂ້ອງທີ່ໄດ້ເປີດເຜີຍໃນເອກະສານລາຍງານການເງິນລວມກິດຈະການລວມ, ຫຼືຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍ ຄວາມເຫັນຂອງພວກເຮົາກໍ່ຈະປ່ຽນແປງໄປ. ຂໍ້ສະຫຼຸບຂອງພວກເຮົາ ຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານ ຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ ກຸ່ມບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

- ການວາງແຜນ ແລະ ປະຕິບັດການກວດສອບກຸ່ມບໍລິສັດເພື່ອໃຫ້ໄດ້ຫຼັກຖານກວດສອບທີ່ເໝາະສົມຢ່າງພຽງພໍກ່ຽວກັບຂໍ້ມູນການເງິນຂອງຫົວໜ່ວຍທຸລະກິດ ຫຼື ຫົວໜ່ວຍທຸລະກິດພາຍໃນກຸ່ມບໍລິສັດ ເພື່ອເປັນພື້ນຖານໃນການປະກອບຄຳຄິດເຫັນຕໍ່ກັບເອກະສານລາຍງານການເງິນລວມກິດຈະການ. ພວກເຮົາມີຄວາມຮັບຜິດຊອບສຳລັບການໃຫ້ທິດທາງ, ການຊີ້ນຳ ແລະ ການທົບທວນຄືນຂອງວຽກງານກວດສອບການປະຕິບັດສຳລັບຈຸດປະສົງຂອງການກວດສອບກຸ່ມບໍລິສັດ. ພວກເຮົາຍັງຄົງຮັບຜິດຊອບພຽງຢ່າງດຽວຕໍ່ກັບຄວາມຄິດເຫັນຂອງພວກເຮົາ.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້, ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫຼັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫຼັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

pwc

ຈາກບັນຫາທີ່ປຶກສາກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາບັນຫາເຫຼົ່ານັ້ນແມ່ນບັນຫາທີ່ມີສາລະສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນລວມກິດຈະການຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ, ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດ ຜູ້ດຽວ

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດ ຜູ້ດຽວ
Pricewaterhouse Coopers (Lao) Sole Company Limited

ທ່ານ ຟົງພັນ ດຳຣົງພັນອຸດົມ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ ສປປ ລາວ
ວັນທີ: 13 ພຶດສະພາ 2025

ໃບລາຍງານຖານະການເງິນລວມກິດຈະການ
ວັນທີ 31 ທັນວາ 2024

	ບົດ ອະທິບາຍ	2024 ກີບ	2023 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	41,063,160,077	23,211,106,583
ໜີ້ຕ້ອງຮັບທາງການຄ້າ, ສຸດທິ	5	184,166,074,495	187,520,217,255
ເຄື່ອງໃນສາງ, ສຸດທິ	6	85,110,678,000	41,969,814,376
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	25.5	403,062,115,650	328,092,964,732
ຊັບສິນໝຸນວຽນອື່ນໆ	7	1,369,953,243,156	832,748,989,269
ລວມຊັບສິນໝຸນວຽນທັງໝົດ		**2,083,355,271,378**	**1,413,543,092,215**
ຊັບສິນບໍ່ໝຸນວຽນ			
ຊັບສິນບັດຄົງທີ່ມີຕົວຕົນ, ສຸດທິ	8	614,446,182,732	572,767,202,769
ຊັບສິນບັດຄົງທີ່ບໍ່ມີຕົວຕົນ, ສຸດທິ	9	1,657,375,595	2,351,417,542
ຊັບສິນເພື່ອການລົງທຶນ, ສຸດທິ	10	537,179,487,215	199,477,136,681
ຊັບສິນບໍ່ໝຸນວຽນອື່ນໆ	11	331,561,554,970	54,373,288,412
ລວມຊັບສິນບໍ່ໝຸນວຽນທັງໝົດ		**1,484,844,600,512**	**828,969,045,404**
ລວມຊັບສິນທັງໝົດ		**3,568,199,871,890**	**2,242,512,137,619**

ບໍລິສັດ ປິໂຕຣລັ່ມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 13 ພຶດສະພາ 2025

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 13 ພຶດສະພາ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນລວມກິດຈະການ.

ໃບລາຍງານຖານະການເງິນລວມກິດຈະການ
ໃນວັນທີ 31 ທັນວາ 2024

	ບົດ ອະທິບາຍ	2024 ກີບ	2023 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ	12	207,616,915,665	376,382,644,137
ໜີ້ຕ້ອງສົ່ງອາກອນ	13	58,198,496,283	51,291,295,251
ເງິນກູ້ຢືມໄລຍະສັ້ນ	14	179,390,548,031	321,327,703,715
ໜີ້ສິນໝຸນວຽນອື່ນໆ	15	131,444,280,636	169,916,729,920
ລວມໜີ້ສິນໝຸນວຽນທັງໝົດ		**576,650,240,615**	**918,918,373,023**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	14	2,083,637,697,036	754,197,374,250
ລວມໜີ້ສິນບໍ່ໝຸນວຽນທັງໝົດ		**2,083,637,697,036**	**754,197,374,250**
ລວມໜີ້ສິນທັງໝົດ		**2,660,287,937,651**	**1,673,115,747,273**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	16	470,000,000,000	470,000,000,000
ສ່ວນເພີ່ມມູນຄ່າຮຸ້ນ	16	27,638,932,340	27,638,932,340
ສ່ວນເພີ່ມຈາກການຕີມູນຄ່າ		560,019,738,105	385,238,515,697
ກຳໄລສະສົມ			
ຈັດສັນ - ຄັງສະສົມຕາມລະບຽບການ	17	34,764,644,805	19,366,778,467
ຄັງສະສົມອື່ນໆ		1,977,267,979	1,977,267,979
ຂາດທຶນສະສົມລໍ້າແບ່ງປັນ		(190,637,386,812)	(337,572,749,860)
ທຶນຄວາມເປັນເຈົ້າຂອງ ຂອງບໍລິສັດແມ່		**903,763,196,417**	**566,648,744,623**
ຜູ້ຖືຮຸ້ນສ່ວນນ້ອຍ		4,148,737,822	2,747,645,723
ລວມທຶນທັງໝົດ		**907,911,934,239**	**569,396,390,346**
ລວມໜີ້ສິນ ແລະ ທຶນທັງໝົດ		**3,568,199,871,890**	**2,242,512,137,619**

ບໍລິສັດ ປິໂຕຣລັ້ມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 13 ພຶດສະພາ 2025

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 13 ພຶດສະພາ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນລວມກິດຈະການ.

ບໍລິສັດ ປິໂຕຣລັ່ງມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດໃນເຄືອ

ໃບລາຍງານຜົນໄດ້ຮັບລວມກິດຈະການ
ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ 2024

	ບິດ ອະທິບາຍ	2024 ກີບ	2023 ກີບ
ລາຍຮັບ	18	4,810,295,618,721	3,848,663,401,378
ຕົ້ນທຶນຂາຍ		(4,482,659,488,767)	(3,547,245,072,599)
ກຳໄລເບື້ອງຕົ້ນ		**327,636,129,954**	**301,418,328,779**
ລາຍຮັບອື່ນໆ	19	298,578,694,051	29,145,018,730
ຂາດທຶນຈາກອັດຕາແລກປ່ຽນ	21	(93,712,113,099)	(84,440,172,961)
ລາຍຈ່າຍໃນການຂາຍ		(23,930,378,505)	(21,159,961,994)
ລາຍຈ່າຍບໍລິຫານ		(160,704,892,143)	(122,327,084,516)
ກຳໄລຈາກການດຳເນີນງານ		**347,867,440,258**	**102,636,128,038**
ລາຍຈ່າຍທາງການເງິນ	22	(158,254,206,249)	(73,693,351,799)
ກຳໄລກ່ອນຫັກອາກອນ		**189,613,234,009**	**28,942,776,239**
ອາກອນກຳໄລ	23	(12,020,832,820)	(16,536,395,110)
ກຳໄລສຸດທິສຳລັບປີ		**177,592,401,189**	**12,406,381,129**
ກຳໄລທີ່ເປັນສ່ວນຂອງ:			
ບໍລິສັດແມ່		176,052,728,293	11,858,664,868
ຜູ້ຖືຮຸ້ນສ່ວນນ້ອຍ		1,539,672,896	547,716,261
		177,592,401,189	**12,406,381,129**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	24	749	50

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 13 ພຶດສະພາ 2025

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 13 ພຶດສະພາ 2025

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນລວມກິດຈະການ.

ໃບລາຍງານສ່ອນປ່ຽນແປງທຶນລວມກິດຈະການ
ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ 2024

				ກຳໄລສະສົມ				
	ທຶນຈົດທະບຽນ ທີ່ຖອກແລ້ວ (ບິດອະທິບາຍຂໍ້ທີ 16) ກີບ	ສ່ວນເພີ່ມມູນຄ່າຮຸ້ນ (ບິດອະທິບາຍຂໍ້ທີ 16) ກີບ	ສ່ວນເພີ່ມຈາກການຕີມູນຄ່າ ກີບ	ຄັງສະສົມຕາມລະບຽບການ (ບິດອະທິບາຍຂໍ້ທີ 17) ກີບ	ຄັງສະສົມອື່ນໆ ກີບ	ຂາດທຶນສະສົມ ລ່ຖ້າແຈ່ງປັນ ກີບ	ຜູ້ຖືຮຸ້ນ ສ່ວນນ້ອຍ ກີບ	ລວມ ກີບ
ຍອດໃນວັນທີ 1 ມັງກອນ 2023	470,000,000,000	27,638,932,340	385,238,515,697	13,933,663,310	1,977,267,979	(339,157,393,967)	2,248,827,499	561,879,812,858
ໂອນເຂົ້າຄັງແຮ	-	-	-	5,433,115,157	-	(5,433,115,157)	-	-
ອາກອນເງິນປັນຜົນ	-	-	-	-	-	(4,840,905,604)	(48,898,037)	(4,889,803,641)
ກຳໄລສຸດທິສຳລັບປີ	-	-	-	-	-	11,858,664,868	547,716,261	12,406,381,129
ຍອດໃນວັນທີ 31 ທັນວາ 2023	**470,000,000,000**	**27,638,932,340**	**385,238,515,697**	**19,366,778,467**	**1,977,267,979**	**(337,572,749,860)**	**2,747,645,723**	**569,396,390,346**
ຍອດໃນວັນທີ 1 ມັງກອນ 2024	470,000,000,000	27,638,932,340	385,238,515,697	19,366,778,467	1,977,267,979	(337,572,749,860)	2,747,645,723	569,396,390,346
ສ່ວນເພີ່ມຈາກການຕີມູນຄ່າ	-	-	174,781,222,408	-	-	-	-	174,781,222,408
ໂອນເຂົ້າຄັງສະສົມ	-	-	-	15,397,866,338	-	(15,397,866,338)	-	-
ອາກອນເງິນປັນຜົນ	-	-	-	-	-	(13,719,498,907)	(138,580,797)	(13,858,079,704)
ກຳໄລສຸດທິສຳລັບປີ	-	-	-	-	-	176,052,728,293	1,539,672,896	177,592,401,189
ຍອດໃນວັນທີ 31 ທັນວາ 2024	**470,000,000,000**	**27,638,932,340**	**560,019,738,105**	**34,764,644,805**	**1,977,267,979**	**(190,637,386,812)**	**4,148,737,822**	**907,911,934,239**

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 13 ພຶດສະພາ 2025

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 13 ພຶດສະພາ 2025

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນລວມກິດຈະການ.

ບໍລິສັດ ປິໂຕຣລັ້ງມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດໃນເຄືອ

ໃບລາຍງານກະແສເງິນສົດລວມກິດຈະການ
ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ 2024

	ບິດ ອະທິບາຍ	2024 ກີບ	2023 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ກຳໄລກ່ອນຫັກອາກອນກຳໄລສຳລັບປີ		189,613,234,009	28,942,776,239
ປັບປຸງເພື່ອສົມທຽບກຳໄລສຸດທິກັບເງິນສົດສຸດທິ			
ຄ່າຫຼ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ	20	14,578,894,981	12,923,424,498
ສຳຮອງໜີ້ຕ້ອງຮັບທວງຍາກ		13,719,529,514	9,343,069,464
ກຳໄລຈາກມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນ	19	(214,360,931,794)	-
ລາຍຮັບດອກເບ້ຍ	19	(68,513,727,411)	(22,541,955,174)
ລາຍຈ່າຍດອກເບ້ຍ		158,254,206,249	73,693,351,799
ການປ່ຽນແປງໃນການດຳເນີນງານ:			
ໜີ້ຕ້ອງຮັບທາງການຄ້າ		(3,337,631,038)	73,045,665,570
ເຄື່ອງໃນສາງ		(43,140,863,624)	7,535,635,315
ໜີ້ຕ້ອງສົ່ງທາງການຄ້າ		(178,805,316,430)	(21,203,117,104)
ໜີ້ຕ້ອງສົ່ງອາກອນ		(11,071,711,491)	18,922,588,111
ຊັບສິນບໍ່ໝຸນວຽນອື່ນໆ		(32,823,918,868)	967,406,967
ຊັບສິນໝຸນວຽນອື່ນໆ		(414,097,063,507)	(299,395,088,769)
ໜີ້ສິນໝຸນວຽນອື່ນໆ		(60,684,546,711)	174,996,204,567
ເງິນສົດທີ່(ໃຊ້ໃນ)/ເກີດຈາກເກີດຂຶ້ນຈາກການດຳເນີນງານ		**(650,669,846,121)**	**57,229,961,483**
ດອກເບ້ຍທີ່ໄດ້ຮັບ		-	647,322,182
ດອກເບ້ຍທີ່ໄດ້ຈ່າຍ		(146,629,940,258)	(73,693,351,799)
ອາກອນກຳໄລທີ່ໄດ້ຈ່າຍ		(7,900,000,000)	(3,940,633,880)
ເງິນສົດສຸດທິທີ່ໃຊ້ໃນກິດຈະກຳການດຳເນີນງານ		**(805,199,786,379)**	**(19,756,702,014)**
ກະແສເງິນສົດຈາກກິດຈະກຳການລົງທຶນ:			
ການໄດ້ມາຂອງຊັບສົມບັດຖາວອນທີ່ມີຕົວຕົນ ແລະ ຊັບສົມບັດຖາວອນທີ່ບໍ່ມີຕົວຕົນ	8,9	(4,124,029,331)	(9,668,218,301)
ຈ່າຍລ່ວງໜ້າໃນການລົງທຶນ		(244,364,347,690)	-
ເງິນໃຫ້ກູ້ຢືມທີ່ໄດ້ຈ່າຍໃນລະຫວ່າງປີ	25.5	(286,011,057,100)	(103,395,758,272)
ເງິນໃຫ້ກູ້ຢືມທີ່ໄດ້ຮັບໃນລະຫວ່າງປີ	25.5	216,012,172,000	51,841,508,000
ເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ		**(318,487,262,121)**	**(61,222,468,573)**

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 13 ພຶດສະພາ 2025

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 13 ພຶດສະພາ 2025

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນລວມກິດຈະການ.

ບໍລິສັດ ປິໂຕຣລັ້ງມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດໃນເຄືອ

ໃບລາຍງານກະແສເງິນສົດລວມກິດຈະການ
ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ 2024

	ບິດ ອະທິບາຍ	2024 LAK	2023 LAK
ກະແສເງິນສົດຈາກ ກິດຈະກຳການເງິນ:			
ເງິນກູ້ຢືມທີ່ໄດ້ຮັບ	14	2,038,158,259,907	1,337,276,777,992
ເງິນກູ້ຢືມທີ່ໄດ້ຊຳລະ	14	(896,987,392,816)	(1,272,813,304,944)
ເງິນສົດສຸດທິທີ່ເກີດຈາກກິດຈະກຳການເງິນ		**1,141,170,867,091**	**64,463,473,048**
ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		17,483,818,591	(16,515,697,539)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ	4	23,211,106,583	39,158,104,505
ກຳໄລຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		368,234,903	568,699,617
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ສຳລັບທ້າຍປີ	**4**	**41,063,160,077**	**23,211,106,583**

ທ່ານ ຄຳສອນ ສິດທິໄຊ
ຜູ້ອຳນວຍການ

ວັນທີ: 13 ພຶດສະພາ 2025

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 13 ພຶດສະພາ 2025

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນລວມກິດຈະການ.

1. ຂໍ້ມູນທົ່ວໄປ

ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ບໍລິສັດ) ແລະ ບໍລິສັດໃນເຄືອ ເຊິ່ງປະກອບມີ ບໍລິສັດ ປີໂຕຣເທຣດ ນຳເຂົ້າ-ສົ່ງ ອອກ ຈຳກັດ ແລະ ບໍລິສັດ ປີໂຕຣເທຣດ ດີສທະບີວຊັນ ຈຳກັດ ເຊິ່ງໄດ້ດຳເນີນງານ ແລະ ຕັ້ງຢູ່ ສປປ ລາວ (ລວມກັນເອີ້ນວ່າ "ກຸ່ມບໍລິສັດ") ແມ່ນເປັນບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ແລະ ບໍລິສັດຈຳກັດ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ແລະ ຈົດທະບຽນກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 3 ຕຸລາ 2008.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ຖະໜົນກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກຸ່ມບໍລິສັດ ໄດ້ຖືຮຸ້ນ 99% ໃນ ບໍລິສັດໃນເຄືອ ທັງສອງບໍລິສັດ ເຊັ່ນດຽວກັນ. ກິດຈະກຳຫຼັກຂອງ ກຸ່ມບໍລິສັດ ແມ່ນການນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຜະລິດຕະພັນ ນ້ຳມັນເຊື້ອໄຟ ແລະ ຜະລິດຕະພັນ ປີໂຕຣລ້ຽມ.

ເອກະສານລາຍການເງິນລວມກິດຈະການ ສະບັບນີ້ໄດ້ຮັບການເຊັນອະນຸມັດ ໂດຍສະພາຜູ້ອຳນວຍການ ໃນວັນທີ 13 ພຶດສະພາ 2025.

2. ນະໂຍບາຍການບັນຊີ

ນະໂຍບາຍການບັນຊີ ຖືກຮັບຮອງນຳໃຊ້ເຂົ້າໃນການສ້າງເອກະສານລາຍງານການເງິນລວມກິດຈະການ ໄດ້ກຳນົດໄວ້ ດັ່ງລຸ່ມນີ້:

2.1 ພື້ນຖານໃນການກະກຽມບົດລາຍງານ

ເອກະສານລາຍງານການເງິນລວມກິດຈະການ ໄດ້ຖືກສ້າງຂຶ້ນ ຕາມນະໂຍບາຍການບັນຊີ ຂອງກຸ່ມບໍລິສັດ ດັ່ງທີ່ໄດ້ອະທິບາຍໄວ້ຂ້າງລຸ່ມ ຂອງເອກະສານລາຍງານການເງິນລວມກິດຈະການ ສະບັບນີ້ ແລະ ໄດ້ສ້າງຂຶ້ນໂດຍໃຊ້ເກນລາຄາຕົ້ນທຶນເດີມໃນການວັດມູນຄ່າຂອງອົງປະກອບຂອງເອກະສານລາຍງານການເງິນ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ (IFRS), ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ PIEs ໃນການຈັດການເຮັດແຜນປະຕິບັດການ ສຳລັບການນຳ IFRS ເຖິງວັນທີ 31 ທັນວາ 2025, ດັ່ງນັ້ນ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຕ້ອງປະຕິບັດ IFRS ຢ່າງເຕັມຮູບແບບໃນວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ໃນຂະນະນີ້ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ. ດັ່ງນັ້ນ, ຫຼັກການບັນຊີທີ່ນຳໃຊ້ອາດຈະແຕກຕ່າງຈາກ IFRS.

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກຳນົດຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ການປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງການຄາດຄະເນໃນເບື້ອງຕົ້ນ ອາດຈະມີຄວາມແຕກຕ່າງກັນ ຢ່າງເປັນສາລະສຳຄັນ.

2. ນະໂຍບາຍການບັນຊີ (ຕໍ່)

2.2 ການບັນຊີຂອງກຸ່ມບໍລິສັດ - ເງິນລົງທຶນໃນບໍລິສັດໃນລູກ

ບໍລິສັດໃນເຄືອ ແມ່ນທຸກກິດຈະການ ທີ່ບໍລິສັດ (ລວມເຖິງຫົວໜ່ວຍດຳເນີນງານ) ມີສິດອຳນາດໃນການຄວບຄຸມກິດຈະການ.

ກຸ່ມບໍລິສັດມີອຳນາດຄວບຄຸມກິດຈະການເມື່ອ ກຸ່ມບໍລິສັດມີຄວາມສ່ຽງຕໍ່ ຫຼື ມີສິດໃນຜົນຕອບທີ່ປ່ຽນແປງຈາກການມີສ່ວນຮ່ວມກັບກິດຈະການນັ້ນ ແລະ ມີຄວາມສາມາດໃນການສົ່ງຕໍ່ຜົນຕອບແທນເຫຼົ່ານັ້ນຜ່ານອຳນາດໃນການຄວບຄຸມກິດຈະການນັ້ນ. ຂໍ້ມູນທາງການເງິນຂອງບໍລິສັດໃນເຄືອໄດ້ຖືກນຳມາລວມກິດຈະການເຕັມຮູບແບບຕັ້ງແຕ່ວັນທີ ກຸ່ມບໍລິສັດມີອຳນາດໃນການຄວບຄຸມບໍລິສັດໃນເຄືອຈົນເຖິງວັນທີ່ບໍລິສັດ ສູນເສຍອຳນາດການຄວບຄຸມໃນບໍລິສັດໃນເຄືອນັ້ນ.

ລາຍການເຄື່ອນໄຫວລະຫວ່າງກັນໃນກຸ່ມບໍລິສັດ ຍອດຍັງເຫຼືອ ແລະ ກຳໄລ ຫຼື ຂາດທຶນ ທີ່ບໍ່ໄດ້ເກີດຂຶ້ນຈິງ ລະຫວ່າງກັນໃນກຸ່ມບໍລິສັດ ຈະຖືກລົບລ້າງອອກໃນເວລາ ທີ່ເຮັດເອກະສານລາຍງານການເງິນລວມກິດຈະການ. ລາຍການບັນຊີ ຂອງ ບໍລິສັດໃນເຄືອ ຈະຖືກປັບປຸງເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງກຸ່ມບໍລິສັດ.

2.3 ການຕີມູນຄ່າເງິນຕາຕ່າງປະເທດ

ລາຍການທີ່ສະແດງໃນແຕ່ລະລາຍການຂອງ ເອກະສານລາຍງານການເງິນລວມກິດຈະການ ໄດ້ຖືກນຳສະເໜີດ້ວຍສະກຸນເງິນກີບ.

ລາຍການທີ່ເປັນສະກຸນເງິນຕາຕ່າງປະເທດໄດ້ຖືກຕີມູນຄ່າເປັນສະກຸນເງິນກີບ ດ້ວຍການນຳໃຊ້ອັດຕາແລກປ່ຽນໃນມື້ທີ່ ລາຍການດັ່ງກ່າວເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນ ທີ່ເປັນສະກຸນເງິນຕາຕ່າງປະເທດຍັງເຫຼືອໃນທ້າຍປີ ໄດ້ຖືກຕີມູນຄ່າເປັນສະກຸນເງິນກີບໂດຍນຳໃຊ້ອັດຕາແລກປ່ຽນໃນທ້າຍປີ. ຜົນຕ່າງກຳໄລ ແລະ ຂາດທຶນ ທັງໝົດຈາກການແປງຄ່າທີ່ຍັງບໍ່ເກີດຂຶ້ນຈິງ ແມ່ນຖືກຮັບຮູ້ໃນໃບລາຍງານຖານະການເງິນລວມກິດຈະການ ແລະ ຈະຖືກດັດປັບລາຍການ ໃນປີຕໍ່ໄປ.

ກຳໄລ ຫຼື ຂາດທຶນ ຈາກອັດຕາແລກປ່ຽນທີ່ເກີດຂຶ້ນຈິງຈະຖືກຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບລວມກິດຈະການເມື່ອມີການຊຳລະ.

ອັດຕາແລກປ່ຽນໄດ້ນຳໃຊ້ຈາກ ທະນາຄານທ້ອງຖິ່ນທີ່ມີຊື່ສຽງ ໃນ ສປປ ລາວ.

2.4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ປະກອບດ້ວຍ: ເງິນສົດຢູ່ໃນມື, ເງິນຝາກ ຢູ່ໃນທະນາຄານ ຫຼື ສະຖາບັນການເງິນອື່ນໆ ໄລຍະສັ້ນ ມີສະພາບຄ່ອງໃນການລົງທຶນສູງ ໃນໄລຍະເວລາ 3 ເດືອນ ຫຼື ໜ້ອຍກວ່າ.

2.5 ໜີ້ຕ້ອງຮັບທາງການຄ້າ

ໜີ້ຕ້ອງຮັບທາງການຄ້າ ຮັບຮູ້ຕາມມູນຄ່າໃບເກັບເງິນຕົ້ນສະບັບ ແລະ ຕີມູນຄ່າຄືນໃໝ່ໂດຍໃຊ້ມູນຄ່າຍັງເຫຼືອ ຫັກ ສຳຮອງໜີ້ຕ້ອງຮັບທອງຍາກຕາມມູນຄ່າເຫຼືອ ຕາມບັນຊີທ້າຍປີ. ສຳຮອງໜີ້ຕ້ອງຮັບທອງຍາກ ແມ່ນສ່ວນຜິດຕ່ຽງລະຫວ່າງ ມູນຄ່າຍັງເຫຼືອໃນບັນຊີຂອງ ໜີ້ຕ້ອງຮັບ ແລະ ຈຳນວນເງິນທີ່ຄາດວ່າຈະເກັບກູ້ຄືນໄດ້. ສຳລັບໜີ້ສູນຈະໄດ້ສະສາງອອກຈາກບັນຊີ ໃນປີ ແລະ ຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບ ໃນສ່ວນຂອງລາຍຈ່າຍບໍລິຫານ.

ນະໂຍບາຍການຕັ້ງສຳຮອງໜີ້ທອງຍາກສຳລັບໜີ້ຕ້ອງຮັບຈາກບໍລິສັດອື່ນມີດັ່ງລຸ່ມນີ້:

2. ນະໂຍບາຍການບັນຊີ (ຕໍ່)

2.5 ໜີ້ຕ້ອງຮັບທາງການຄ້າ (ຕໍ່)

ຈາກ 6 ເດືອນ ເຖິງ 1 ປີ	30%
ຈາກ 1 ປີ ເຖິງ 2 ປີ	50%
2 ປີຂຶ້ນໄປ	100%

ກຸ່ມບໍລິສັດ ບໍ່ມີນະໂຍບາຍການຕັ້ງສຳຮອງໜີ້ທວງຍາກສຳລັບ ບໍລິສັດ ທີ່ກ່ຽວຂ້ອງ ເຊິ່ງລວມເຖິງເງິນໃຫ້ກູ້ຢືມ, ໜີ້ຕ້ອງຮັບ ແລະ ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ.

ໃນວັນທີ 30 ມິຖຸນາ 2024, ຜູ້ບໍລິຫານໄດ້ຕັດສິນໃຈໃນການປ່ຽນແປງນະໂຍບາຍບັນຊີ ສຳລັບຄັງສຳຮອງໜີ້ທວງຍາກສຳລັບໜີ້ຕ້ອງຮັບຈາກບໍລິສັດ ຫຼື ຜູ້ໃຫ້ບໍລິການໃຫ້ໂຄງການຂອງລັດຖະບານ. ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ທີ 3.1.

2.6 ເຄື່ອງໃນສາງ

ເຄື່ອງໃນສາງ ໄດ້ຖືກສະແດງ ໃນລາຄາຕົ້ນທຶນ ຫຼື ໃນມູນຄ່າຂາຍອອກໄດ້ສຸດທິທີ່ຕ່ຳກວ່າ, ເຊິ່ງຕົ້ນທຶນຂອງເຄື່ອງໃນສາງ ໄດ້ຖືກກຳນົດໂດຍວິທີສະເລ່ຍ. ຕົ້ນທຶນໃນການຊື້ເຄື່ອງໃນສາງ ປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນຄ່າໃຊ້ຈ່າຍທາງກົງທີ່ເກີດຈາກການຊື້ເຄື່ອງໃນສາງ ເຊັ່ນ: ພາສີນຳເຂົ້າ ແລະ ຄ່າໃຊ້ຈ່າຍການຂົນສົ່ງ, ຫັກບັນດາສ່ວນຫຼຸດ, ເງິນແຮ ຫຼື ການສົ່ງຄືນ. ຕົ້ນທຶນຂອງສິນຄ້າສຳເລັດຮູບ ປະກອບດ້ວຍ: ຕົ້ນທຶນການອອກແບບ, ວັດຖຸດິບ, ຄ່າແຮງງານທາງກົງອື່ນໆ ແລະ ສ່ວນເກີນການຜະລິດທີ່ກ່ຽວຂ້ອງກັບກຳລັງການຜະລິດ, ບໍ່ລວມຕົ້ນທຶນການກູ້ຢືມ. ມູນຄ່າສຸດທິ ທີ່ຈະໄດ້ຮັບ ໝາຍເຖິງການປະເມີນລາຄາຂາຍ ໃນຊ່ວງເວລາປົກກະຕິຂອງການດຳເນີນທຸລະກິດ, ລົບໃຫ້ຕົ້ນທຶນລວມ ແລະ ຄ່າໃຊ້ຈ່າຍໃນການຂາຍເຄື່ອງໃນສາງ. ສ່ວນຫຼຸດມູນຄ່າອາດຈະເກີດຂຶ້ນໄດ້ໃນກໍລະນີທີ່ມີເຫດການສະເພາະ ເຊັ່ນ: ເມື່ອເຄື່ອງໃນສາງພົ້ນສະໄໝ, ຮອບວຽນຂາຍຊ້າ ແລະ ສິນຄ້າເສຍຫາຍ.

2.7 ຊັບສິນເພື່ອການລົງທຶນ

ຊັບສິນທີ່ຖືຄອງໂດຍກຸ່ມບໍລິສັດ ເພື່ອຫາປະໂຫຍດຈາກລາຍໄດ້ຄ່າເຊົ່າໃນໄລຍະຍາວ ຫຼື ເພື່ອເພີ່ມຂຶ້ນຂອງມູນຄ່າຂອງຊັບສິນ ຫຼື ທັງສອງຢ່າງ ແລະ ບໍ່ໄດ້ມີໄວ້ເພື່ອຄອບຄອງໂດຍກຸ່ມບໍລິສັດ ເຊິ່ງຊັບສິນເຫຼົ່ານີ້ຈະຖືກຈັດປະເພດເປັນ ຊັບສິນເພື່ອການລົງທຶນ, ຊັບສິນເພື່ອການລົງທຶນຍັງລວມເຖິງຊັບສິນທີ່ຢູ່ລະຫວ່າງກໍ່ສ້າງ ຫຼື ພັດທະນາ ເພື່ອເປັນຊັບສິນເພື່ອການລົງທຶນໃນອະນາຄົດ.

ທີ່ດິນຈະຖືກບັນທຶກເປັນຊັບສິນເພື່ອການລົງທຶນຂອງກຸ່ມບໍລິສັດ, ຊັບສິນດັ່ງກ່າວ ຖືກນຳໃຊ້ເຂົ້າໃນການລົງທຶນໄປແລ້ວ.

ຊັບສິນເພື່ອການລົງທຶນ ຈະບັນທຶກເບື້ອງຕົ້ນໂດຍລາຄາທຶນໂດຍລວມຕົ້ນທຶນທີ່ກ່ຽວຂ້ອງສຳລັບການໄດ້ມາຂອງຊັບສິນເພື່ອການລົງທຶນ. ຍົກເວັ້ນທີ່ດິນ, ທີ່ດິນທີ່ຖືກຈັດປະເພດເປັນຊັບສິນເພື່ອການລົງທຶນ ແມ່ນຖືກຮັບຮູ້ໂດຍໃຊ້ວິທີການປະເມີນມູນຄ່າຄືນໃຫມ່ (ບົດອະທິບາຍຂໍ້ທີ 2.8).

ຕົ້ນທຶນທີ່ເກີດຂຶ້ນພາຍຫຼັງຈາກການໄດ້ມາຈະຖືກບັນທຶກເປັນຕົ້ນທຶນຂອງຊັບສິນເພື່ອການລົງທຶນ ເມື່ອມີຄວາມເປັນໄປໄດ້ວ່າ ຈະເກີດຜົນປະໂຫຍດດ້ານເສດຖະກິດໃນອະນາຄົດເຂົ້າສູ່ກຸ່ມບໍລິສັດ ແລະ ສາມາດປະມານການໄດ້ຢ່າງໜ້າເຊື່ອຖື ຕົ້ນທຶນການສ້ອມແປງຈະຖືກບັນທຶກເປັນລາຍຈ່າຍເມື່ອເກີດຂຶ້ນ ເມື່ອມີການປ່ຽນສ່ວນປະກອບຂອງຊັບສິນເພື່ອການລົງທຶນ ສ່ວນປະກອບນັ້ນ ຈະຖືກລ້າງມູນຄ່າອອກຈາກບັນຊີ.

ຫຼັງຈາກການຮັບຮູ້ຕົ້ນທຶນ ຊັບສິນໃນການລົງທຶນໃນເບື້ອງຕົ້ນ, ຊັບສິນດັ່ງກ່າວຕ້ອງໄດ້ຖືກ ຫັກ ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເຊື່ອມສະສົມ.

2. ນະໂຍບາຍການບັນຊີ (ຕໍ່)

2.7 ຊັບສິນເພື່ອການລົງທຶນ (ຕໍ່)

ທີ່ດິນບໍ່ໄດ້ຫັກຄ່າຫຼ້ຍຫ້ຽນ (ບົດອະທິບາຍຂໍ້ທີ 2.8), ຄ່າຫຼ້ຍຫ້ຽນຂອງຊັບສິນເພື່ອການລົງທຶນຈະຄິດໄລ່ຫັກຄ່າຫຼ້ຍຫ້ຽນ ໂດຍໃຊ້ ມູນຄ່າຫຼັງຫັກລາຄາທີ່ຄາດວ່າຈະຂາຍໄດ້ ໂດຍວິທີແບບສະເລ່ຍສະໝ່ຳສະເໝີຕາມອາຍຸການໃຊ້ງານທີ່ຄາດຄະເນ ຂອງແຕ່ລະລາຍການຊັບສິນດັ່ງຕໍ່ໄປນີ້:

ອາຄານ	7– 10 ປີ

ນັບຕັ້ງແຕ່ວັນທີ 31 ທັນວາ 2024 ເປັນຕົ້ນໄປ, ຊັບສິນທີ່ຖືຄອງໂດຍກຸ່ມບໍລິສັດ ເພື່ອຫາປະໂຫຍດຈາກລາຍໄດ້ຄ່າເຊົ່າໃນ ໄລຍະຍາວ ຫຼື ເພື່ອເພີ່ມຂຶ້ນຂອງມູນຄ່າຂອງຊັບສິນ ຫຼື ທັງສອງຢ່າງ ແລະ ບໍ່ໄດ້ມີໄວ້ເພື່ອຄອບຄອງໂດຍກຸ່ມບໍລິສັດ ແລະ ຊັບສິນຕ່າງໆທີ່ຢູ່ໃນປ້ຳນ້ຳມັນຂອງພາກສ່ວນອື່ນ, ທີ່ມີລາຍຮັບຄ່າເຊົ່າແອບແຝງຜ່ານສັນຍາຊື້ຂາຍນ້ຳມັນ, ເຊິ່ງຊັບສິນເຫຼົ່ານີ້ ຈະຖືກຈັດປະເພດເປັນ. ຊັບສິນເພື່ອການລົງທຶນຊັບສິນເພື່ອການລົງທຶນປະເພດ "ອາຄານ" ຈະຖືກວັດດ້ວຍມູນຄ່າ ຍຸດຕິທຳ. ຈາກນັ້ນ, ກໍຈະຖືກຮັບຮູ້ດ້ວຍມູນຄ່າຍຸດຕິທຳ. ສ່ວນຕ່າງໃນມູນຄ່າຍຸດຕິທຳຈະຖືກບັນທຶກໄວ້ໃນກຳໄລ ຫຼື ຂາດທຶນ. ມູນຄ່າຍຸດຕິທຳ ຈະຖືກກຳນົດເປັນປະຈຳທຸກປີ ອີງຕາມການປະເມີນຂອງຜູ້ປະເມີນອິດສະຫຼະພາຍນອກ ດັ່ງທີ່ໄດ້ ອະທິບາຍໄວ້ໃນບົດອະທິບາຍຂໍ້ທີ 3.2.

2.8 ຊັບສິນຄົງທີ່ມີຕົວຕົນ

ລາຍການຂອງຊັບສິນຄົງທີ່ມີຕົວຕົນຍົກເວັ້ນທີ່ດິນ* ໄດ້ຖືກບັນທຶກບັນຊີຕາມມູນຄ່າຕົ້ນທຶນເດີມ ຫັກຄ່າຫຼ້ຍຫ້ຽນສະສົມ, ມູນຄ່າຕົ້ນທຶນເດີມ ແມ່ນລວມມີລາຍຈ່າຍທີ່ກ່ຽວຂ້ອງໂດຍກົງ ຂອງຊັບສິນນັ້ນ.

*ທີ່ດິນຈະຖືກຮັບຮູ້ໃນວິທີການປະເມີນມູນຄ່າຄືນໃຫມ່ໂດຍອີງໃສ່ໄລຍະເວລາ, ແຕ່ຢ່າງຫນ້ອຍ 2 ປີ, ການປະເມີນມູນຄ່າ ແມ່ນຕ້ອງໂດຍຜູ້ປະເມີນອິດສະຫຼະພາຍນອກ. ການເພີ່ມຂຶ້ນ/ຫຼຸດລົງຂອງມູນຄ່າຕາມບັນຊີທີ່ເກີດຈາກການປະເມີນມູນຄ່າທີ່ ດິນຄືນໃໝ່ແມ່ນຖືກບັນທຶກໃນ "ສ່ວນເພີ່ມຈາກການຕີມູນຄ່າຊັບສິນຄືນໃຫມ່" ໃນສ່ວນຂອງຜູ້ຖືຮຸ້ນ. ຈຳນວນຊັບສິນທີ່ຖືກ ສະສາງຈາກສ່ວນເພີ່ມການຕີມູນຄ່າຊັບສິນຄືນໃຫມ່ ກຸ່ມບໍລິສັດ ຈະບັນທຶກໄວ້ໃນກຳໄລສະສົມ ເມື່ອຊັບສິນທີ່ຕີມູນຄ່າຄືນ ນັ້ນໄດ້ຖືກຂາຍອອກໄປ.

ຕົ້ນທຶນທີ່ເກີດຂຶ້ນພາຍຫຼັງຈາກການໄດ້ມາຈະຖືກບັນທຶກລວມເປັນຕົ້ນທຶນຂອງຊັບສິນນັ້ນ ຫຼື ແຍກບັນທຶກເມື່ອມີຄວາມເປັນ ໄປໄດ້ວ່າຈະເກີດຜົນປະໂຫຍດດ້ານເສດຖະກິດໃນອະນາຄົດເຂົ້າສູ່ກຸ່ມບໍລິສັດ ແລະ ສາມາດປະມານການໄດ້ຢ່າງໜ້າເຊື່ອຖື, ຕົ້ນທຶນການສ້ອມແປງຈະຖືກບັນທຶກເປັນລາຍຈ່າຍເມື່ອເກີດຂຶ້ນຈິງ ເມື່ອມີການປ່ຽນສ່ວນປະກອບຂອງຊັບສິນ ສ່ວນປະ ກອບນັ້ນ ຈະຖືກລ້າງມູນຄ່າອອກຈາກບັນຊີ.

ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາແມ່ນໄດ້ບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບໃນລະຫວ່າງ ໄລຍະການເງິນທີ່ເກີດຂຶ້ນ, ທີ່ດິນແມ່ນບໍ່ມີຄ່າຫຼ້ຍຫ້ຽນ, ການຫັກຄ່າຫຼ້ຍຫ້ຽນຊັບສິນຄົງທີ່ມີຕົວຕົນ ຈະໃຊ້ວິທີແບບສະເລ່ຍສະໝ່ຳສະເໝີບົນພື້ນຖານ ອາຍຸການໃຊ້ງານຄາດຄະເນຂອງແຕ່ລະລາຍການຊັບສິນ ດັ່ງຕໍ່ໄປນີ້:

ອາຄານ ແລະ ການປັບປຸງອາຄານ	5 - 30 ປີ
ເຄື່ອງຈັກ ແລະ ອຸປະກອນຕ່າງໆ	2 - 10 ປີ
ພາຫະນະ	5 ປີ
ເຄື່ອງໃຊ້ສຳນັກງານ	2-10 ປີ

ກຳໄລ ແລະ ຂາດທຶນ ຈາກການຂາຍຊັບສິນຄົງທີ່ໄດ້ຖືກກຳນົດໂດຍການສົມທຽບລາຄາຂາຍ ກັບ ມູນຄ່າຕາມບັນຊີ ແລະ ຈົດເພີ່ມເຂົ້າໃນ "ກຳໄລ/(ຂາດທຶນ) ອື່ນໆ-ສຸດທິ" ໃນໃບລາຍງານຜົນໄດ້ຮັບຂອງກຸ່ມບໍລິສັດ.

2. ນະໂຍບາຍການບັນຊີ (ຕໍ່)

2.9 ຊັບສິນຄົງທີ່ບໍ່ມີຕົວຕົນ

ຊັບສິນຄົງທີ່ບໍ່ມີຕົວຕົນແມ່ນປະກອບມີ ໂປຣແກຣມຄອມພິວເຕີ, ການຊື້ລິຂະສິດໃນການນຳໃຊ້ໂປຣແກຣມຄອມພິວເຕີ ໄດ້ຈັດເປັນມູນຄ່າຊັບສິນຄົງທີ່ ບົນພື້ນຖານຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກການຊື້ ແລະ ການສົ່ງ-ມອບ ຈົນກຽມພ້ອມໃຊ້ງານ, ຄ່າໃຊ້ຈ່າຍເຫຼົ່ານີ້ ຖືກຫັກເປັນຄ່າໃຊ້ຈ່າຍຕະຫຼອດອາຍຸການໃຊ້ງານ, ເຊິ່ງບໍ່ເກີນ 2-10 ປີ, ຕົ້ນທຶນທີ່ກ່ຽວຂ້ອງກັບໂປຣແກຣມຄອມພິວເຕີສ່ວນທີ່ເຫຼືອຈະບັນທຶກເປັນລາຍຈ່າຍເມື່ອເກີດຂຶ້ນຈິງ.

2.10 ເງິນກູ້ຢືມ

ເງິນກູ້ຢືມ ແມ່ນຮັບຮູ້ຕາມຈຳນວນເງິນທີ່ໄດ້ຮັບ ຕົ້ນທຶນຂອງເງິນກູ້ຢືມເຊິ່ງປະກອບມີດອກເບ້ຍຈ່າຍ ແລະ ຕົ້ນທຶນທາງກົງອື່ນໆທີ່ກຸ່ມບໍລິສັດໄດ້ຈ່າຍໄປເພື່ອການກູ້ຢືມເງິນ ຕົ້ນທຶນການກູ້ຢືມເງິນທີ່ນຳໃຊ້ທົ່ວໄປຈະຖືກບັນທຶກເປັນລາຍຈ່າຍໃນລະຫວ່າງປີທີ່ເກີດ.

ຕົ້ນທຶນການກູ້ຢືມເກີດຂຶ້ນ ແລະ ກ່ຽວຂ້ອງໂດຍກົງກັບການຈັດຫາການກໍ່ສ້າງໃນຊ່ວງໄລຍະເວລາກໍ່ສ້າງຈົນສ້າງແລ້ວສຳເລັດ ພ້ອມໃຊ້ງານ ຈະຖືກບັນທຶກເປັນຕົ້ນທຶນຂອງຊັບສິນນັ້ນ.

ຕົ້ນທຶນຄ່າຈັດການເງິນກູ້ຢືມ ຈະບັນທຶກເປັນລາຍຈ່າຍລ່ວງໜ້າ ແລະ ຕັດຈ່າຍເຂົ້າໃນໃນລາຍງານຜົນໄດ້ຮັບຕາມອາຍຸສັນຍາການກູ້ຢືມ.

ເງິນກູ້ຢືມ ໄດ້ຖືກຈຳແນກໃຫ້ເປັນໜີ້ສິນໝຸນວຽນ ຍົກເວັ້ນໃນກໍລະນີທີ່ ກຸ່ມບໍລິສັດ ໄດ້ຮັບສິດໃນການການຊຳລະໜີ້ຂອງໜີ້ສິນທັ້ງໝົດ ຢ່າງຕ່ຳເປັນເວລາ 12 ເດືອນ ພາຍຫຼັງວັນທີຂອງບົດລາຍງານ.

2.11 ສັນຍາເຊົ່າ

ສັນຍາເຊົ່າ - ທີ່ກຸ່ມບໍລິສັດເປັນຜູ້ເຊົ່າ

ສັນຍາເຊົ່າ ທີ່ບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນໃຫ້ແກ່ຜູ້ເຊົ່າ ເຊິ່ງຈຳແນກສັນຍາເຊົ່າດັ່ງກ່າວ ເປັນສັນຍາເຊົ່າປົກກະຕິໃນການດຳເນີນທຸລະກິດ ລາຍຈ່າຍພາຍໃຕ້ສັນຍາເຊົ່າ (ລືບທຸກລາຍການ ທີ່ໄດ້ຮັບຈາກຜູ້ໃຫ້ເຊົ່າ) ຖືກຈັດເປັນລາຍຈ່າຍໃນໃບລາຍງານຜົນໄດ້ຮັບ ແບບສະໝ່ຳສະເໝີ ຕາມອາຍຸການຂອງສັນຍາເຊົ່າ.

ເມື່ອສັນຍາເຊົ່າ ມີການຍົກເລີກສັນຍາກ່ອນໝົດອາຍຸການເຊົ່າ, ຈຳນວນເງິນຄ່າເຊົ່າ ແລະ ຄ່າໃຊ້ຈ່າຍອື່ນໆ ຈະຕົກເປັນຂອງຜູ້ໃຫ້ເຊົ່າໃນຮູບແບບການປັບໃໝ ແລະ ຮັບຮູ້ເປັນຄ່າໃຊ້ຈ່າຍໃນຮອບເວລາທີ່ມີການຍົກເລີກສັນຍາດັ່ງກ່າວ.

ສັນຍາເຊົ່າທີ່ດິນ ອາຄານ ແລະ ອຸປະກອນ ເຊິ່ງຜູ້ເຊົ່າເປັນຜູ້ຮັບຄວາມສ່ຽງ ແລະ ຜົນຕອບແທນຂອງຄວາມເປັນເຈົ້າຂອງເກືອບທັງໝົດ ໃນສາລະສຳຄັນຂອງການເປັນເຈົ້າຂອງຈະຖືກຈັດປະເພດເປັນການເຊົ່າທາງດ້ານການເງິນ. ໂດຍສັນຍາເຊົ່າດ້ານການເງິນຈະຖືກບັນທຶກເປັນຊັບສິນຕັ້ງແຕ່ເລີ່ມຕົ້ນຂອງສັນຍາເຊົ່າ ໃນມູນຄ່າທີ່ຕ່ຳກວ່າມູນຄ່າຕາມບັນຊີຂອງຊັບສິນທີ່ເຊົ່າ ຫຼື ມູນຄ່າປັດຈຸບັນຂອງຄ່າເຊົ່າ.

ຈຳນວນເງິນທີ່ຕ້ອງຈ່າຍດັ່ງກ່າວຈະປັນສ່ວນລະຫວ່າງໜີ້ສິນ ແລະ ຄ່າໃຊ້ຈ່າຍທາງການເງິນ. ເພື່ອໄດ້ຮັບອັດຕາທີ່ຄົງທີ່ຈາກຍອດຄົງຄ້າງຂອງຫນີ້ສິນທີ່ຍັງບໍ່ໄດ້ຈ່າຍ. ພັນທະການເຊົ່າທີ່ກ່ຽວຂ້ອງຫຼັງຈາກຫັກຄ່າໃຊ້ຈ່າຍທາງດ້ານການເງິນຈະຖືກລວມເຂົ້າກັບເຈົ້າໜີ້ໄລຍະຍາວອື່ນໆ. ອົງປະກອບດອກເບ້ຍຂອງຕົ້ນທຶນທາງດ້ານການເງິນແມ່ນຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນເອກະສານລາຍງານກຳໄລ - ຂາດທຶນ ໃນໄລຍະຂອງສັນຍາເຊົ່າ ໂດຍການສ້າງອັດຕາດອກເບ້ຍຄົງທີ່ໃນແຕ່ລະງວດຈາກຍອດຄົງເຫຼືອຂອງຫນີ້ສິນໃນແຕ່ລະງວດ. ຊັບສິນ, ອາຄານ ຫຼື ອຸປະກອນທີ່ໄດ້ມາພາຍໃຕ້ສັນຍາເຊົ່າທາງດ້ານການເງິນແມ່ນຖືກຫັກຄ່າຫຼ້ຽຫ້ຽນໃນໄລຍະເວລາທີ່ສັ້ນກວ່າລະຫວ່າງ ອາຍຸການໃຊ້ງານຂອງຊັບສິນ ແລະ ໄລຍະເວລາຂອງສັນຍາເຊົ່າ.

2. ນະໂຍບາຍການບັນຊີ (ຕໍ່)

2.11 ສັນຍາເຊົ່າ (ຕໍ່)

ສັນຍາເຊົ່າ ທີ່ທາງກຸ່ມບໍລິສັດເປັນຜູ້ໃຫ້ເຊົ່າ

ຊັບສິນທີ່ທາງກຸ່ມບໍລິສັດໃຫ້ເຊົ່າ ພາຍໃຕ້ສັນຍາເຊົ່າໃນການດຳເນີນທຸລະກິດ ຖືກຮັບຮູ້ເປັນຊັບສິນຄົງທີ່ມີຕົວຕົນ ແລະ ຊັບສິນເພື່ອການລົງທຶນໃນໃບລາຍງານຖານະການເງິນ. ລາຍຮັບຈາກຄ່າເຊົ່າ (ລົບທຸກລາຍການ ທີ່ໄດ້ມອບໃຫ້ຜູ້ເຊົ່າ) ຖືກຮັບຮູ້ແບບສະເລ່ຍ ຕາມອາຍຸການຂອງສັນຍາເຊົ່າດັ່ງກ່າວ.

2.12 ອາກອນກຳໄລ

ກຸ່ມບໍລິສັດ ບັນທຶກອາກອນລາຍໄດ້ ຕາມຫຼັກເກນຄ້າງຮັບຄ້າງຈ່າຍ ຕາມກົດໝາຍສ່ວຍສາອາກອນລາວ. ກຸ່ມບໍລິສັດ ບໍ່ໄດ້ບັນທຶກ ອາກອນລາຍໄດ້ທີ່ຄ້າງຈ່າຍ ຫຼື ຄ້າງຮັບ ໃນອະນາຄົດ ເຊິ່ງເກີດຈາກສ່ວນຜິດຊົ່ວຄາວ. ລາຍຈ່າຍອາກອນແມ່ນຮັບຮູ້ບົນພື້ນຖານຜົນການດຳເນີນງານໃນປີຫຼັງການດັດແກ້ ທີ່ບໍ່ສາມາດຫັກລາຍຈ່າຍ ແລະ ລາຍການເຄື່ອນໄຫວອື່ນໆ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ອັດຕາອາກອນ. ພາຍໃຕ້ລະບຽບການບັນຊີ ແລະ ກົດໝາຍສ່ວຍສາອາກອນ ລາຍຈ່າຍອາກອນໃນປີ ແມ່ນໄດ້ຄິດໄລ່ຕາມພື້ນຖານລາຍຮັບຂອງບໍລິສັດ (ບົດອະທິບາຍຂໍ້ທີ 23).

ໃນ ສປປ ລາວ ອາກອນລາຍໄດ້ຕ້ອງໄດ້ຮັບການກວດກາລາຍລະອຽດຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ. ນອກຈາກນີ້, ຂໍ້ພິບເຫັນທີ່ເກີດຂຶ້ນຈາກການກວດກາຄືນດັ່ງກ່າວອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ກຸ່ມບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມຕື່ມ ຫຼື ຮັບຄືນ ໃນກໍລະນີຈຳເປັນ ແລະ ສາລະສຳຄັນ. ເຊິ່ງອາດຈະມີຜົນໃນການຈ່າຍເງິນ ຫຼື ຮັບຄືນ ຂອງການຮັບຮູ້ລາຍຈ່າຍອາກອນລາຍໄດ້ພາຍໃນປີທີ່ມີການກວດກາໄດ້ສຳເລັດ.

2.13 ທຶນຈົດທະບຽນ

ຮຸ້ນສາມັນ ແລະ ຮຸ້ນບຸລິມະສິດແບບໄຖ່ຖອນຄືນບໍ່ໄດ້ ແຕ່ມີສິດໄດ້ຮັບເງິນປັນຜົນຈະຖືກຈັດປະເພດເປັນທຶນຂອງຂາຮຸ້ນ.

ສ່ວນເພີ່ມມູນຄ່າຮຸ້ນ ຈະຖືກບັນທຶກເມື່ອມີການອອກຈຳໜ່າຍຮຸ້ນ ຫຼື ມີການເພີ່ມຮຸ້ນ ໂດຍສະແດງຜົນຕ່າງຂອງລາຄາທີ່ສະເໜີຂາຍ ແລະ ລາຄາຕົ້ນທຶນທີ່ຈົດທະບຽນໄວ້ ຫຼັງຈາກຫັກຕົ້ນທຶນໃນການອອກຮຸ້ນ (ເຊັ່ນ: ຄ່າທຳນຽມການຈຳໜ່າຍ ແລະ ລາຍຈ່າຍອື່ນໆ ທີ່ກ່ຽວກັບການກະປະເມີນມູນຄ່າ ແລະ ຄ່າທີ່ປຶກສາ).

ອີງຕາມຄູ່ມືແນະນຳການປະຕິບັດສະບັບເລກທີ 056/ຄຄຊ ອອກໂດຍ ຄຄຊ ລົງວັນທີ 28 ເມສາ 2015, ໂດຍອະນຸຍາດໃຫ້ບໍລິສັດ ສົ່ງຄືນສ່ວນເພີ່ມມູນຄ່າຮຸ້ນທີ່ເກີດຈາກການເຂົ້າຕະຫຼາດຄັ້ງທຳອິດ ຈຳນວນ 75% ຫຼັງຈາກໄດ້ຫັກຕົ້ນທຶນການອອກຮຸ້ນແລ້ວ, ແກ່ຜູ້ຖືຮຸ້ນເຊິ່ງສ້າງຕັ້ງບໍລິສັດ.

2.14 ການຮັບຮູ້ລາຍຮັບ

ລາຍຮັບໃນໃບເກັບເງິນຈາກການຂາຍສິນຄ້າສຸດທິຫຼັງຫັກສ່ວນຫຼຸດທີ່ໄດ້ຮັບ ແລະ ສ່ວນຫຼຸດຈາກການສັ່ງຊື້. ລາຍຮັບຈາກການຂາຍສິນຄ້າຮັບຮູ້ເມື່ອຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນຂອງຄວາມເປັນເຈົ້າຂອງສິນຄ້າແມ່ນຖືກໂອນ ຫຼື ຖືກສົ່ງໃຫ້ຜູ້ຊື້.

ລາຍໄດ້ຈາກການໃຫ້ບໍລິການແມ່ນຖືກຮັບຮູ້ໃນຮອບບັນຊີທີ່ໃຫ້ບໍລິການ.

ລາຍຮັບທີ່ມາຈາກການໃຫ້ເຊົ່າ ໄດ້ຖືກຮັບຮູ້ ແບບສະເລ່ຍສະໝ່ຳສະເໝີຕະຫຼອດອາຍຸສັນຍາເຊົ່າ.

2. ນະໂຍບາຍການບັນຊີ (ຕໍ່)

2.15 ການຮັບຮູ້ລາຍຮັບ (ຕໍ່)

ລາຍຮັບອື່ນໆ ແມ່ນໄດ້ຮັບຮູ້ບົນພື້ນຖານ ດັ່ງລຸ່ມນີ້:

- ລາຍຮັບ ດອກເບ້ຍ ຮັບຮູ້ຕາມພື້ນຖານອັດຕາສ່ວນຂອງເວລາ ໃນສ່ວນຂອງຍອດໜີ້ຄ້າງຊຳລະ ແລະ ໃນອັດຕາດອກເບ້ຍ ຕາມສັນຍາຈົນເຖິງກຳນົດໄລຍະເວລາ ແລະ ລາຍຮັບດັ່ງກ່າວຈະຖືກຮັບຮູ້ເປັນລາຍຮັບຄ້າງຮັບເຂົ້າກຸ່ມບໍລິສັດ.

- ລາຍຮັບອື່ນໆ ແມ່ນຮັບຮູ້ຕາມເກນຄ້າງຮັບຄ້າງຈ່າຍ.

3. ການປ່ຽນແປງນະໂຍບາຍບັນຊີ

3.1 ໜີ້ຕ້ອງຮັບທາງການຄ້າ

ໃນວັນທີ 30 ມິຖຸນາ 2024, ຝ່າຍຜູ້ບໍລິຫານໄດ້ມີການອະນຸມັດການປ່ຽນແປງນະໂຍບາຍການຕັ້ງສຳຮອງໜີ້ທວງຍາກສຳລັບໜີ້ຕ້ອງຮັບຈາກບໍລິສັດ ຫຼື ຜູ້ໃຫ້ບໍລິການໃຫ້ໂຄງການຂອງລັດຖະບານ. ການຕັ້ງສຳຮອງໜີ້ທວງຍາກສຳລັບໜີ້ຕ້ອງຮັບສຳລັບບໍລິສັດ ຫຼື ຜູ້ໃຫ້ບໍລິການຈະຖືກຕັ້ງໄວ້ 5% ຕໍ່ປີສຳລັບຍອດຄ້າງຈ່າຍທີ່ເກີນ 2 ປີຂຶ້ນໄປ (ບົດອະທິບາຍຂໍ້ທີ 2.5).

ການປ່ຽນແປງນະໂຍບາຍການບັນຊີນີ້ແມ່ນບັນທຶກໄປໃນຕໍ່ໜ້າ.

3.2 ຊັບສິນເພື່ອການລົງທຶນ, ສຸດທິ

ໃນວັນທີ 31 ທັນວາ 2024, ຜູ້ບໍລິຫານໄດ້ຕັດສິນໃຈ ແລະ ອະນຸມັດການປ່ຽນແປງນະໂຍບາຍບັນຊີ ຊັບສິນປະເພດອາຄານ ທີ່ຢູ່ໃນຊັບສິນເພື່ອການລົງທຶນ, ສຸດທິ (ບົດອະທິບາຍຂໍ້ທີ 2.7) ຈາກວິທີຕົ້ນທຶນ ມາເປັນວິທີມູນຄ່າຍຸດຕິທຳ ເຊິ່ງຜູ້ບໍລິຫານເຊື່ອວ່າ ການປ່ຽນແປງນີ້ເກີດຈາກຄວາມຕ້ອງການໃນການນຳສະເໜີຖານະການເງິນຂອງບໍລິສັດ ໃຫ້ມີຄວາມເໝາະສົມ ແລະ ກ່ຽວຂ້ອງກັນຫຼາຍຂຶ້ນ, ເຊິ່ງສະທ້ອນເຖິງສະພາບການຂອງຕະຫຼາດໃນປັດຈຸບັນ ແລະ ມູນຄ່າທີ່ແທ້ຈິງຂອງຊັບສິນເພື່ອການລົງທຶນ ນັບຕັ້ງແຕ່ມື້ທີ່ມີການປ່ຽນແປງເປັນຕົ້ນໄປ, ຈະໄດ້ມີການບັນທຶກຊັບສິນດັ່ງກ່າວດ້ວຍວິທີມູນຄ່າຍຸດຕິທຳ. ມູນຄ່າຍຸດຕິທຳ ຈະຖືກກຳນົດເປັນປະຈຳທຸກປີ ອີງຕາມການປະເມີນຂອງຜູ້ປະເມີນອິດສະຫຼະພາຍນອກ. ການປ່ຽນແປງຂອງມູນຄ່າຍຸດຕິທຳຈະຖືກນຳສະເໜີໃນໃບລາຍການຜົນໄດ້ຮັບເປັນ "ລາຍຮັບອື່ນໆ" (ບົດອະທິບາຍຂໍ້ທີ 19).

4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2024 ກີບ	2023 ກີບ
ເງິນສົດໃນມື	111,509,511	354,855,710
ເງິນສົດໃນທະນາຄານ	40,951,650,566	22,856,250,873
	41,063,160,077	**23,211,106,583**

5. ໜີ້ຕ້ອງຮັບທາງການຄ້າ, ສຸດທິ

	2024 ກີບ	2023 ກີບ
ໜີ້ຕ້ອງຮັບທາງການຄ້າ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.3)	36,635,703,971	26,364,428,435
ໜີ້ຕ້ອງຮັບທາງການຄ້າ – ພາກສ່ວນອື່ນ	181,097,431,817	181,003,320,599
	217,733,135,788	**207,367,749,034**
ຫັກ:ສຳຮອງໜີ້ຕ້ອງຮັບທວງຍາກ	(33,567,061,293)	(19,847,531,779)
ໜີ້ຕ້ອງຮັບທາງການຄ້າ - ສຸດທິ	**184,166,074,495**	**187,520,217,255**

ໜີ້ຕ້ອງຮັບທາງການຄ້າທັງໝົດແມ່ນໃຊ້ເປັນຫຼັກຊັບຄ້ຳປະກັນສຳລັບເງິນກູ້ຢືມຂອງກຸ່ມບໍລິສັດ (ບົດອະທິບາຍຂໍ້ທີ 14)

6. ເຄື່ອງໃນສາງ, ສຸດທິ

	2024 ກີບ	2023 ກີບ
ນ້ຳມັນເຊື້ອໄຟ	83,087,915,957	40,208,477,387
ເຄື່ອງໃຊ້ຫ້ອງການ ແລະ ອ່າໄຫຼ່	1,656,820,031	1,417,303,524
ບັດເຕີມນ້ຳມັນ Plus card	147,067,126	193,588,586
ສີນ້ຳມັນ	218,874,886	150,444,879
	85,110,678,000	**41,969,814,376**
ຫັກ: ສຳຮອງຄ່າເຊື່ອມມູນຄ່າຕາມມູນຄ່າສຸດທິ	-	-
ເຄື່ອງໃນສາງ - ສຸດທິ	**85,110,678,000**	**41,969,814,376**

ເຄື່ອງໃນສາງທັງໝົດແມ່ນໃຊ້ເປັນຫຼັກຊັບຄ້ຳປະກັນສຳລັບເງິນກູ້ຢືມຂອງກຸ່ມບໍລິສັດ (ບົດອະທິບາຍຂໍ້ທີ 14)

7. ຊັບສິນໝຸນວຽນອື່ນໆ

	2024 ກີບ	2023 ກີບ
ໜີ້ຕ້ອງຮັບ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.3)	767,011,971,151	239,625,406,410
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ	55,055,810,961	18,306,108,421
ຈ່າຍລ່ວງໜ້າ	41,210,036,769	22,554,798,826
ເງິນຈ່າຍມັດຈຳໃຫ້ຜູ້ສະໜອງ	9,319,799,096	9,189,431,004
ເງິນຈ່າຍລ່ວງໜ້າໃຫ້ພະນັກງານ	114,500,000	65,000,000
ເງິນຈ່າຍລ່ວງໜ້າສຳລັບອາກອນກຳໄລ	1,146,854,492	1,555,210,789
ໜີ້ຕ້ອງຮັບອາກອນມູນຄ່າເພີ່ມ	1,589,719,081	1,160,182,627
ໜີ້ຕ້ອງຮັບອື່ນໆ	1,272,878,645	1,448,993,317
ຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ໄດ້ເກີດຂຶ້ນຈິງ	493,231,672,961	538,843,857,875
	1,369,953,243,156	**832,748,989,269**

8. ຊັບສິນບັດຄີງທີ່ມີຕົວຕົນ, ສຸດທິ

	ທີ່ດິນ ກີບ	ອາຄານ ແລະ ການ ປັບປຸງ ກີບ	ເຄື່ອງຈັກ ແລະ ອຸປະກອນ ກີບ	ເຄື່ອງໃຊ້ຫ້ອງການ ກີບ	ຍານພາຫະນະ ກີບ	ຊັບສິນພວມ ກໍ່ສ້າງ ກີບ	ລວມ ກີບ
ວັນທີ 31 ທັນວາ 2023							
ຕົ້ນທຶນ	442,458,350,747	173,178,396,766	29,296,661,013	23,403,445,719	8,908,144,243	10,401,274,175	687,646,272,663
ຫັກ: ຄ່າຫຼ້ຍຫ້ຽນສະສົມ	-	(64,350,425,084)	(25,121,654,269)	(20,146,646,214)	(5,260,344,327)	-	(114,879,069,894)
ມູນຄ່າຕາມບັນຊີສຸດທິ	**442,458,350,747**	**108,827,971,682**	**4,175,006,744**	**3,256,799,505**	**3,647,799,916**	**10,401,274,175**	**572,767,202,769**
ຍອດຍົກມາມູນຄ່າຕາມບັນຊີສຸດທິ	442,458,350,747	108,827,971,682	4,175,006,744	3,256,799,505	3,647,799,916	10,401,274,175	572,767,202,769
ເພີ່ມຂຶ້ນ	-	459,957,226	334,995,232	1,017,231,503	-	2,113,328,864	3,925,512,825
ຄ່າຫຼ້ຍຫ້ຽນ (ບົດອະທິບາຍຂໍ້ທີ 20)	-	(9,011,524,320)	(2,368,262,164)	(1,202,395,387)	(372,679,654)	-	(12,954,861,525)
ການຈັດປະເພດຄືນ (i)	-	(47,310,570,765)	(999,001)	(314,209)	-	-	(47,311,883,975)
ສ່ວນເພີ່ມຈາກການຕີມູນຄ່າ	98,020,212,638	-	-	-	-	-	98,020,212,638
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**540,478,563,385**	**52,965,833,823**	**2,140,740,811**	**3,071,321,412**	**3,275,120,262**	**12,514,603,039**	**614,446,182,732**
ວັນທີ 31 ທັນວາ 2024							
ຕົ້ນທຶນ	540,478,563,385	107,592,168,436	20,016,797,578	24,392,481,071	8,908,144,243	12,514,603,039	713,902,757,752
ຫັກ: ຄ່າຫຼ້ຍຫ້ຽນສະສົມ	-	(54,626,334,613)	(17,876,056,767)	(21,321,159,659)	(5,633,023,981)	-	(99,456,575,020)
ມູນຄ່າຕາມບັນຊີສຸດທິ	**540,478,563,385**	**52,965,833,823**	**2,140,740,811**	**3,071,321,412**	**3,275,120,262**	**12,514,603,039**	**614,446,182,732**

ຊັບສິນຄີງທີ່ມີຕົວຕົນບາງລາຍການແມ່ນໄດ້ນຳໄປເປັນຫຼັກຊັບຄ້ຳປະກັນສຳລັບເງິນກູ້ຢືມຂອງ ກຸ່ມບໍລິສັດ (ບົດອະທິບາຍຂໍ້ທີ 14).

(i) ໃນວັນທີ 31 ທັນວາ 2024, ຜູ້ບໍລິຫານໄດ້ຈັດປະເພດຊັບສິນປະເພດຕຶກອາຄານຫ້ອງການ ແລະ ປ້ຳນ້ຳມັນມັນບາງສ່ວນ ທີ່ຢູ່ໃນຊັບສິນບັດຄີງທີ່ມີຕົວຕົນ ທີ່ມີມູນຄ່າຍັງເຫຼືອຕາມບັນຊີສຸດທິ 47,311,883,975 ກີບ ມາເປັນຊັບສິນເພື່ອການລົງທຶນ ເຊິ່ງຊັບສິນດັ່ງກ່າວແມ່ນເຂົ້າເງື່ອນໄຂນິຍາມຂອງຊັບສິນເພື່ອການລົງທຶນ.

9. ຊັບສິນບັດຄົງທີ່ ບໍ່ມີຕົວຕົນ, ສຸດທິ

	ໂປຣແກຼມຄອມພິວເຕີ ກີບ
ວັນທີ 1 ມັງກອນ 2024	
ຕົ້ນທຶນ	10,376,412,840
ຫັກ: ຄ່າເຊື່ອມມູນຄ່າສະສົມ	(8,024,995,298)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**2,351,417,542**
ຍອດຍົກມາມູນຄ່າຕາມບັນຊີສຸດທິ	2,351,417,542
ເພີ່ມຂຶ້ນ	198,516,505
ຄ່າເຊື່ອມມູນຄ່າ (ບົດອະທິບາຍຂໍ້ທີ 20)	(892,558,452)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**1,657,375,595**
ວັນທີ 31 ທັນວາ 2024	
ຕົ້ນທຶນ	10,574,929,344
ຫັກ: ຄ່າເຊື່ອມມູນຄ່າສະສົມ	(8,917,553,749)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**1,657,375,595**

10. ຊັບສິນເພື່ອການລົງທຶນ, ສຸດທິ

	ທີ່ດິນ ກີບ	ອາຄານ ກີບ	ລວມ ກີບ
ວັນທີ 1 ມັງກອນ 2024			
ຕົ້ນທຶນ	194,059,035,920	10,639,511,056	204,698,546,976
ຫັກ: ຄ່າຫຼ້ຍຫ້ຽນສະສົມ	-	(5,221,410,295)	(5,221,410,295)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**194,059,035,920**	**5,418,100,761**	**199,477,136,681**
ຍອດຍົກມາມູນຄ່າຕາມບັນຊີສຸດທິ	194,059,035,920	5,418,100,761	199,477,136,681
ຄ່າຫຼ້ຍຫ້ຽນ (ບົດອະທິບາຍຂໍ້ທີ 20)	-	(731,475,004)	(731,475,004)
ການຈັດປະເພດຄືນ (i)	-	47,311,883,975	47,311,883,975
ສ່ວນເພີ່ມຈາກການຕີມູນຄ່າ	76,761,009,769	-	76,761,009,769
ກຳໄລສຸດທິຈາກການປັບມູນຄ່າຍຸດຕິທຳ (ບົດອະທິບາຍຂໍ້ທີ 19)	-	214,360,931,794	214,360,931,794
ມູນຄ່າຍັງເຫຼືອໃນວັນທີ 31 ທັນວາ 2024	**270,820,045,689**	**266,359,441,526**	**537,179,487,215**

ຊັບສິນເພື່ອການລົງທຶນ ແມ່ນ ຊັບສິນປະເພດທີ່ດິນ, ອາຄານທີ່ຢູ່ໃນນະຄອນຫຼວງວຽງຈັນ, ສ ປປ ລາວ ແລະ ປ້ຳນ້ຳມັນ ເຊິ່ງສ່ວນໃຫຍ່ ແມ່ນໃຫ້ບໍລິສັດໃນເຄືອເຊົ່າບໍລິການ.

ທີ່ດິນບາງສ່ວນແມ່ນໃຊ້ເປັນຫຼັກຊັບຄ້ຳປະກັນສຳລັບເງິນກູ້ຢືມຂອງກຸ່ມບໍລິສັດ (ບົດອະທິບາຍຂໍ້ທີ 14).

(i) ໃນວັນທີ 31 ທັນວາ 2024, ຜູ້ບໍລິຫານໄດ້ຈັດປະເພດຊັບສິນປະເພດຕຶກອາຄານຫ້ອງການ ແລະ ປ້ຳນ້ຳມັນມັນບາງສ່ວນ ທີ່ຢູ່ໃນຊັບສິນບັດຄົງທີ່ມີຕົວຕົນ ທີ່ມີມູນຄ່າຍັງເຫຼືອຕາມບັນຊີສຸດທິ 47,311,883,975 ກີບ ມາເປັນຊັບສິນເພື່ອການລົງທຶນ ເຊິ່ງຊັບສິນດັ່ງກ່າວແມ່ນເຂົ້າເງື່ອນໄຂນິຍາມຂອງຊັບສິນເພື່ອການລົງທຶນ.

11. ຊັບສິນບໍ່ໝຸນວຽນອື່ນໆ

	2024 ກີບ	2023 ກີບ
ຈ່າຍລ່ວງໜ້າ*	81,085,176,577	52,633,057,709
ຈ່າຍລ່ວງໜ້າສຳລັບການລົງທຶນ**	244,364,347,690	-
ຈ່າຍລ່ວງໜ້າສຳລັບການຊື້ຊັບສິນ	4,371,800,000	-
ຈ່າຍລ່ວງໜ້າສຳລັບສະຖານີປໍ້ານ້ຳມັນ ແລະ ອື່ນໆ	1,740,230,703	1,740,230,703
	331,561,554,970	**54,373,288,412**

*ສ່ວນໃຫຍ່ປະກອບມີ ຈ່າຍລ່ວງໜ້າໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຈຳນວນ 34,419,839,505 ກີບ (2023: 34,419,839,505 ກີບ) (ບົດອະທິບາຍຂໍ້ທີ 25.3), ຄ່າທຳນຽມອະນຸມັດເງິນກູ້ເພື່ອລໍຖ້າຕັດບັນຊີ ຈຳນວນ 24,696,505,634 ກີບ ແລະ ລາຍຈ່າຍລ່ວງໜ້າອື່ນໆ.

** ໃນເດືອນ ທັນວາ 2024, ກຸ່ມບໍລິສັດໄດ້ຈ່າຍເງິນໃຫ້ແກ່ທີ່ປຶກສາພາຍນອກ ແລະ ລັດຖະບານ ເປັນເງິນລ່ວງໜ້າສຳລັບການລົງທຶນໃນໂຄງການຕ່າງໆດັ່ງລຸ່ມນີ້:

- ໂຄງການທາງລົດໄຟ ວຽງຈັນ - ຫວຸງ ອໍ່ງ": ເຊິ່ງໃນປັດຈຸບັນ ໂຄງການ ແມ່ນຢູ່ໃນຂັ້ນຕອນການສຶກສາ ແລະ ພັດທະນາຄວາມເປັນໄປໄດ້. ຍອດທີ່ລົງທຶນໃນວັນທີ 31 ທັນວາ 2024 ແມ່ນ 87,385,820,185 ກີບ.

- ໂຄງການ Tank farm ນ້ຳມັນໃນລາວ: ເຊິ່ງເປັນການລົງທຶນລະຫວ່າງ ກຸ່ມບໍລິສັດ ແລະ ບໍລິສັດ Muhibbar Engineering ຈຳກັດ, ໃນປັດຈຸບັນແມ່ນຢູ່ໃນຂັ້ນຕອນການສຶກສາ ແລະ ພັດທະນາຄວາມເປັນໄປໄດ້. ຍອດທີ່ລົງທຶນທັງໝົດນະວັນທີ 31 ທັນວາ 2024 ແມ່ນ 90,741,572,100 ກີບ.

- ໂຄງການ Tank farm ນ້ຳມັນໃນຫວຽດນາມ: ເຊິ່ງໃນປັດຈຸບັນ ໂຄງການ ແມ່ນຢູ່ໃນຂັ້ນຕອນການສຶກສາ ແລະ ພັດທະນາຄວາມເປັນໄປໄດ້. ຍອດທີ່ລົງທຶນທັງໝົດນະວັນທີ 31 ທັນວາ 2024 ແມ່ນ 66,236,955,405 ກີບ.

12. ໜີ້ຕ້ອງສົ່ງທາງການຄ້າ

	2024 ກີບ	2023 ກີບ
ໜີ້ຕ້ອງສົ່ງທາງການຄ້າ – ພາກສ່ວນອື່ນ	196,784,699,267	351,984,593,751
ໜີ້ຕ້ອງສົ່ງທາງການຄ້າ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.3)	10,832,216,398	24,398,050,386
	207,616,915,665	**376,382,644,137**

13. ໜີ້ຕ້ອງສົ່ງອາກອນ

	2024 ກີບ	2023 ກີບ
ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ	18,854,060,406	8,299,827,433
ໜີ້ຕ້ອງສົ່ງພາສີນຳເຂົ້າ	58,345,293	5,886,622,340
ໜີ້ຕ້ອງສົ່ງອາກອນລາຍໄດ້ສ່ວນບຸກຄົນ	289,335,609	155,579,535
ໜີ້ຕ້ອງສົ່ງອາກອນລາຍໄດ້	20,248,871,632	27,941,621,754
ໜີ້ຕ້ອງສົ່ງອາກອນເງິນປັນຜົນ*	18,747,883,344	5,417,217,871
ໜີ້ຕ້ອງສົ່ງອາກອນອື່ນໆ ແລະ ຕາມລະບຽບການ**	-	3,590,426,318
	58,198,496,283	**51,291,295,251**

*ໜີ້ຕ້ອງສົ່ງອາກອນເງິນປັນຜົນ ຂອງບໍລິສັດໃນເຄືອ ຈຳນວນ 18,747,883,344 ກີບ (2023: 5,417,217,871 ກີບ) ຕາມ ກົດ ໝາຍ ວ່າດ້ວຍອາກອນລາຍໄດ້ ແລະ ຄຳແນະນຳຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍອາກອນລາຍໄດ້ ໃນມາດຕາ 41 ການແຈ້ງ ເສຍອາກອນລາຍໄດ້ຈາກເງິນປັນຜົນ. ໃນວັນທີບົດລາຍງານການເງິນ, ຜູ້ຖືຮຸ້ນຂອງບໍລິສັດໃນເຄືອ ຍັງບໍ່ທັນໄດ້ມີມະຕິຕົກລົງເພື່ອ ຮັບຮອງເອົາການຈ່າຍເງິນປັນຜົນ.

**ສ່ວນໃຫຍ່ແມ່ນຍອດຄ້າງຊຳລະຂອງໜີ້ຕ້ອງສົ່ງ ທີ່ອີງຕາມການປະເມີນ ຂອງເຈົ້າໜ້າທີ່ສ່ວຍສາອາກອນ ລົງວັນທີ 27 ທັນວາ 2019.

ເຈົ້າໜ້າທີ່ອາກອນໄດ້ກວດກາ ແລະ ອອກບົດບັນທຶກກ່ຽວກັບພັນທະຂອງຄ່າໃຊ້ຈ່າຍອາກອນ ສຳລັບ ສົກປີ 2014 ຫາ 2017 ຈຳນວນ 20,835,576,105 ກີບ. ພ້ອມກັນນີ້, ເຈົ້າໜ້າທີ່ອາກອນໄດ້ລະບຸໃນບົດບັນທຶກວ່າບໍລິສັດອາດຈະມີພັນທະໃນການຈ່າຍ ຄ່າປັບໃໝ ສຳລັບ ສົກປີ 2014 ຫາ 2017 ຈຳນວນ 7,417,484,961 ກີບ ເຊິ່ງຈຳນວນດັ່ງກ່າວແມ່ນຍັງບໍ່ສາມາດຕັດສິນໄດ້ ແລະ ຕ້ອງໄດ້ຂໍຄຳເຫັນຈາກກະຊວງການເງິນ.

ຜູ້ບໍລິຫານໄດ້ພິຈາລະນາ ບັນທຶກລາຍຈ່າຍອາກອນຈຳນວນ 20,835,576,105 ກີບ ໃນບົດລາຍງານການເງິນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2019, ແລະ ບໍ່ມີໜີ້ຄ້າງຊຳລະວັນທີ 31 ທັນວາ 2024 (2023: 3.5 ຕື້ກີບ); ໃນລະຫວ່າງປີ ບໍລິສັດໄດ້ຊຳ ລະຍອດທີ່ຄ້າງດັ່ງກ່າວ 3.5 ຕື້ກີບ.

13. ໜີ້ຕ້ອງສົ່ງອາກອນ (ຕໍ່)

ກ່ຽວກັບພັນທະທີ່ຕ້ອງເສຍຄ່າປັບໄໝ ສຳລັບ ສົກປີ 2014 ຫາ 2017 ຈຳນວນ 7,417,484,961 ກີບ. ກຸ່ມບໍລິສັດ ໄດ້ຮັບບົດບັນທຶກຈາກກົມສ່ວຍສາອາກອນ ອີງຕາມເອກະສານອ້າງອີງ ເລກທີ 0210 ລົງວັນທີ 28 ມັງກອນ 2020, ບາງສ່ວນຂອງພັນທະຄ່າປັບໄໝ ຂອງປີ 2014 ຫາ 2017 ຈຳນວນ 964,759,679 ກີບ ແມ່ນໄດ້ຮັບອະນຸຍາດໃຫ້ຍົກເວັ້ນ. ດັ່ງນັ້ນ, ໃນວັນທີ 31 ທັນວາ 2024 ກຸ່ມບໍລິສັດ ມີພັນທະຄ່າປັບໄໝທີ່ຍັງສະຫຼຸບບໍ່ໄດ້ ແລະ ຕ້ອງຂໍຄຳຄິດເຫັນສຸດທ້າຍຈາກກະຊວງການເງິນ ຈຳນວນ 6,452,725,282 ກີບ (2023: 6,452,725,282 ກີບ).

ໃນຂະນະນີ້, ຜູ້ບໍລິຫານ ພວມດຳເນີນການຂໍການຍົກເວັ້ນພັນທະດັ່ງກ່າວ. ເນື່ອງຈາກວ່າຍັງບໍ່ມີຄວາມແນ່ນອນຂອງຈຳນວນທີ່ຈະຖືກປັບໄໝ, ຜູ້ບໍລິຫານຈຶ່ງໄດ້ພິຈາລະນາບໍ່ບັນທຶກໜີ້ຕ້ອງສົ່ງ ຄ່າປັບໄໝ ຈຳນວນ 6,452,725,282 ກີບ (2023: 6,452,725,282 ກີບ) ເຂົ້າໃນບົດລາຍງານການເງິນ.

14. ເງິນກູ້ຢືມ

	2024 ກີບ	2023 ກີບ
ໝຸນວຽນ		
ສ່ວນໝຸນວຽນຂອງເງິນກູ້ຢືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.4)	61,962,857,743	181,128,945,600
ສ່ວນໝຸນວຽນຂອງເງິນກູ້ຢືມໄລຍະສັ້ນຈາກທະນາຄານ	23,792,107,441	49,593,335,650
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.4)	93,635,582,847	90,605,422,465
	179,390,548,031	**321,327,703,715**
ບໍ່ໝຸນວຽນ		
ເງິນກູ້ຢືມຈາກທະນາຄານ	1,308,486,417,362	33,297,256,734
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.4)	775,151,279,674	720,900,117,516
	2,083,637,697,036	**754,197,374,250**
	2,263,028,245,067	**1,075,525,077,965**

ການເຄື່ອນໄຫວຂອງເງິນກູ້ຢືມສາມາດວິເຄາະໄດ້ດັ່ງລຸ່ມນີ້

	2024 ກີບ	2023 ກີບ
ວັນທີ 1 ມັງກອນ	1,075,525,077,965	834,314,266,444
ເງິນກູ້ຢືມໄດ້ຮັບພາຍໃນປີ	2,038,158,259,907	1,337,276,777,992
ເງິນກູ້ຢືມໄດ້ຊຳລະຄືນພາຍໃນປີ	(896,987,392,816)	(1,272,813,304,944)
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຈິງ	46,332,300,011	176,747,338,473
ວັນທີ 31 ທັນວາ	**2,263,028,245,067**	**1,075,525,077,965**

14. ເງິນກູ້ຢືມ (ຕໍ່)

ຜູ້ໃຫ້ກູ້ຢືມ	ເງື່ອນໄຂການຊຳລະ	ໄລຍະເວລາເບື້ອງຕົ້ນ	ວົງເງິນກູ້	ອັດຕາດອກເບ້ຍຕໍ່ປີ	ຫຼັກຊັບຄ້ຳປະກັນ	ຍອດເຫຼືອໃນວັນທີ 31 ທັນວາ 2024
ບໍລິສັດ ບິວລະພາ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້ຢືມ	29 ທັນວາ 2019 ເປັນຕົ້ນໄປ	4,398,535 ໂດລາ	0%	- ບໍ່ມີ	3,324,369 ໂດລາ (ທຽບເທົ່າ 72,667,382,847 ກີບ)
ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ	ຕົ້ນທຶນ: ຊຳລະໃນມື້ຄົບກຳນົດ ດອກເບ້ຍ: ຊຳລະທຸກເດືອນ	11 ເມສາ 2023 – 11 ເມສາ 2026	150,000,000,000 ກີບ	9%	- ດິນ ແລະ ອາຄານ 18 ແຫ່ງ	33,297,256,733 ກີບ
ທະນາຄານ ຫວຽດຕິນ ລາວ ຈຳກັດ	ຕົ້ນທຶນ: ຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້ຢືມ ດອກເບ້ຍ: ຊຳລະທຸກເດືອນ	30 ພະຈິກ 2024 – 30 ພະຈິກ 2025	80,000,000,000 ກີບ (ສາມາດນຳໃຊ້ເງິນກູ້ເປັນສະກຸນເງິນໂດລາ)	9.5%	- ດິນ ແລະ ອາຄານ 2 ແຫ່ງ	1,088,435 ໂດລາ (ທຽບເທົ່າ 23,792,107,441 ກີບ)
ທະນາຄານ ພັງສະຫວັນ	ຕົ້ນທຶນ: ຊຳລະ 4 ງວດຕໍ່ປີ ຕາມ "ຕາຕະລາງຊຳລະເງິນກູ້" ດອກເບ້ຍ: ຊຳລະທຸກເດືອນ	25 ທັນວາ 2023 – 25 ທັນວາ 2028	588,000 ໂດລາ 70,000,000 ບາດ 22,000,000,000 ກີບ	10% 9%,11% 9%	- ດິນ ແລະ ອາຄານ 11 ແຫ່ງ - ສັນຍາສະໜອງນ້ຳມັນແກ່ບໍລິສັດພູເບ້ຍ ຈຳກັດ, ບໍລິສັດ ຢຸນນານ ການກໍ່ສ້າງ ແລະ ການລົງທຶນ (ລາວ) ຈຳກັດຜູ້ດຽວ - ດິນ ແລະ ປ້ຳນ້ຳມັນ 7 ແຫ່ງ ຂອງບໍລິສັດ ດີສທີບິວຊັ້ນ ຈຳກັດ - ດິນ ແລະ ປ້ຳນ້ຳມັນ 9 ແຫ່ງ ຂອງ ບໍລິສັດ ປິໂຕລ້ຽມ ເທດດິ້ງລາວ ມະຫາຊົນ	7,476,122 ໂດລາ 55,739,300 ບາດ 16,398,233,000 ກີບ (ທຽບເທົ່າ 215,235,525,619 ກີບ)
ທະນາຄານ ພັງສະຫວັນ	ຕົ້ນທຶນ: ຊຳລະທຸກເດືອນ "ຕາຕະລາງຊຳລະເງິນກູ້" ດອກເບ້ຍ: ຊຳລະທຸກເດືອນ	26 ທັນວາ 2024 – 26 ທັນວາ 2029	752,900,000 ບາດ	11%		751,667,000 ບາດ (ທຽບເທົ່າ 477,609,211,798 ກີບ)
ທະນາຄານ ພັງສະຫວັນ	ຕົ້ນທຶນ: ຊຳລະໃນມື້ຄົບກຳນົດ ດອກເບ້ຍ: ຊຳລະທຸກເດືອນ	27 ທັນວາ 2024 – 27 ທັນວາ 2027	6,600,000 ໂດລາ	11%		6,600,000 ໂດລາ (ທຽບເທົ່າ 144,269,400,000 ກີບ)
ທະນາຄານ ພັງສະຫວັນ	ຕົ້ນທຶນ: ຊຳລະໃນມື້ຄົບກຳນົດ ດອກເບ້ຍ: ຊຳລະທຸກເດືອນ	26 ກຸມພາ 2024 – 26 ກຸມພາ 2025	33,000,000 ບາດ	10%	ບໍ່ມີ (ຄ້ຳປະກັນໂດຍ ທ່ານ ຄຳສອນ ສິດທິໄຊ - ຜູ້ອຳນວຍການ)	33,000,000 ບາດ (ທຽບເທົ່າ 20,968,200,000 ກີບ)
ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ	ຕົ້ນທຶນ: ຊຳລະໃນມື້ຄົບກຳນົດ ດອກເບ້ຍ: ຊຳລະທຸກເດືອນ	03 ເມສາ 2024 – 07 ເມສາ 2027	50,000,000 ໂດລາ	8.25%	ບໍ່ມີ (ຄ້ຳປະກັນໂດຍກະຊວງການເງິນ)	50,000,000 ໂດລາ (ທຽບເທົ່າ 1,092,950,000,000 ກີບ)
ທະນາຄານ ພັດທະນາລາວ	ຕົ້ນທຶນ: ຊຳລະໃນມື້ຄົບກຳນົດ ດອກເບ້ຍ: ຊຳລະທຸກເດືອນ	09 ທັນວາ 2024 – 09 ທັນວາ 2029	65,000,000 ໂດລາ	7%	ເຄື່ອງໃນສາງ ແລະ ຫນີ້ຕ້ອງຮັບຂອງບໍລິສັດ ໂຕເທຣດ ນຳເຂົ້າ - ສົ່ງອອກ ຈຳກັດ	8,337,031 ໂດລາ (ທຽບເທົ່າ 182,239,160,629 ກີບ)

14. ເງິນກູ້ຢືມ (ຕໍ່)

ຜູ້ໃຫ້ກູ້ຢືມ	ເງື່ອນໄຂການຊຳລະ	ໄລຍະເວລາເບື້ອງຕົ້ນ	ວົງເງິນກູ້	ອັດຕາດອກເບ້ຍຕໍ່ປີ	ຫຼັກຊັບຄ້ຳປະກັນ	ຍອດເຫຼືອໃນວັນທີ 31 ທັນວາ 2024
ທະນາຄານ ພັດທະນາລາວ	ຕົ້ນທຶນ: ຊຳລະໃນມື້ຄົບກຳນົດ ດອກເບ້ຍ: ຊຳລະທຸກເດືອນ	27 ພະຈິກ 2024 – 27 ພະຈິກ 2029	8,500,000 ໂດລາ	7%	ເຄື່ອງໃນສາງ ແລະ ໜີ້ຕ້ອງຮັບຂອງບໍລິສັດ ດີສທິບິວຊັ່ນ ຈຳກັດ	0 ໂດລາ (ທຽບເທົ່າ 0 ກີບ)
					ລວມ	**76,825,957 ໂດລາ** **840,406,300 ບາດ** **49,695,489,733 ກີບ** **(ທຽບເທົ່າ 2,263,028,245,067 ກີບ)**

14. ເງິນກູ້ຢືມ (ຕໍ່)

ອັດຕາດອກເບ້ຍເງິນກູ້ຢືມຂອງ ກຸ່ມບໍລິສັດ ມີດັ່ງຕໍ່ໄປນີ້:

	2024 ກີບ	2023 ກີບ
ເງິນກູ້ຢືມ		
- ອັດຕາດອກເບ້ຍຄົງທີ່	2,263,028,245,067	1,075,525,077,965
ລວມເງິນກູ້ຢືມ	**2,263,028,245,067**	**1,075,525,077,965**

ມູນຄ່າສັນຍາເງິນກູ້ຢືມໄລຍະຍາວແບ່ງຕາມມື້ຄົບກຳນົດ ມີດັ່ງຕໍ່ໄປນີ:

	2024 ກີບ	2023 ກີບ
ໃນລະຫວ່າງ 1 ເຖິງ 2 ປີ	117,427,290,288	140,198,758,115
ໃນລະຫວ່າງ 2 ເຖິງ 5 ປີ	2,145,600,554,779	935,326,319,850
	2,263,028,245,067	**1,075,525,077,965**

15. ໜີ້ສິນໝຸນວຽນອື່ນໆ

	2024 ກີບ	2023 ກີບ
ເງິນລ່ວງໜ້າຈາກລູກຄ້າ	18,666,784,824	21,130,985,760
ໜີ້ຕ້ອງສົ່ງອື່ນໆ	21,001,963,551	25,440,674,699
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ທີ 25.3)	4,803,247,598	9,814,309,516
ກຳໄລລໍຖ້າຕັດບັນຊີຈາກອັດຕາແລກປ່ຽນລທີ່ບໍ່ເກີດຂຶ້ນຈິງ	86,972,284,663	113,530,759,945
	131,444,280,636	**169,916,729,920**

16. ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນ

	ຈຳນວນຮຸ້ນ ຮຸ້ນ	ຮຸ້ນສາມັນ ກີບ	ສ່ວນເພີ່ມມູນຄ່າ ຮຸ້ນ ກີບ	ລວມ ກີບ
ວັນທີ 1 ມັງກອນ 2023	235,000,000	470,000,000,000	27,638,932,340	497,638,932,340
ການອອກຮຸ້ນໃໝ່	-	-	-	-
ວັນທີ 31 ທັນວາ 2023	**235,000,000**	**470,000,000,000**	**27,638,932,340**	**497,638,932,340**
ວັນທີ 1 ມັງກອນ 2024	235,000,000	470,000,000,000	27,638,932,340	497,638,932,340
ການອອກຮຸ້ນໃໝ່	-	-	-	-
ວັນທີ 31 ທັນວາ 2024	**235,000,000**	**470,000,000,000**	**27,638,932,340**	**497,638,932,340**

17. ຄ່າສະສົມຕາມລະບຽບການ

	2024 ກີບ	2023 ກີບ
ວັນທີ 1 ມັງກອນ	19,366,778,467	13,933,663,310
ຄ່າສະສົມເພີ່ມຂຶ້ນໃນປີ	15,397,866,338	5,433,115,157
ວັນທີ 31 ທັນວາ	**34,764,644,805**	**19,366,778,467**

ຄ່າສະສົມຕາມລະບຽບການ ແມ່ນສອດຄ່ອງຕາມກົດໝາຍວິສາຫະກິດຂອງ ສປປ ລາວ ເຊິ່ງກຳນົດການຈັດສັນກຳໄລຕາມກົດໝາຍຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີ, ພາຍຫຼັງຫັກອອກຂາດທຶນສະສົມ (ຖ້າມີ) ຈົນກ່ວາຄ່າສຳຮອງດັ່ງກ່າວບັນລຸ 50% ຈົນກວ່າຄ່າສະສົມດັ່ງກ່າວບັນລຸ 50% ຂອງມູນຄ່າທຶນຈົດທະບຽນ.

18. ລາຍຮັບ

	2024 ກີບ	2023 ກີບ
ລາຍຮັບຈາກການຂາຍນ້ຳມັນເຊື້ອໄຟ	4,807,996,784,330	3,846,613,265,976
ລາຍຮັບຈາກການບໍລິການບັດ Plus card	2,298,834,391	2,050,135,402
	4,810,295,618,721	**3,848,663,401,378**

19. ລາຍຮັບອື່ນໆ

	2024 ກີບ	2023 ກີບ
ລາຍຮັບຄ່າເຊົ່າ (ບົດອະທິບາຍຂໍ້ທີ 25.1)	15,228,087,840	4,642,993,069
ລາຍຮັບດອກເບ້ຍ	68,513,727,411	22,541,955,174
ກຳໄລຈາກມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນ (ບົດອະທິບາຍຂໍ້ທີ 10)	214,360,931,794	-
ລາຍຮັບຈາກ ການບໍລິການທາງດ້ານໄອທີ (ບົດອະທິບາຍຂໍ້ທີ 25.1)	-	704,882,895
ລາຍຮັບອື່ນໆ	475,947,006	1,255,187,592
	298,578,694,051	**29,145,018,730**

20. ລາຍຈ່າຍຈຳແນກຕາມລັກສະນະເນື້ອໃນ

	2024 ກີບ	2023 ກີບ
ຕົ້ນທຶນຂອງການຂາຍນ້ຳມັນເຊື້ອໄຟ ແລະ ການບໍລິການ	4,482,572,881,386	3,547,245,072,599
ຕົ້ນທຶນຄ່າແຮງງານ	45,456,331,823	30,090,536,332
ຄ່າຫຼ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ (ບົດອະທິບາຍຂໍ້ທີ 8,9,10)	14,578,894,981	12,923,424,498
ຄ່າທຳນຽມທະນາຄານ	28,352,747,009	19,155,107,052
ຄ່າທີ່ປຶກສາ	8,164,228,051	10,698,651,702
ລາຍຈ່າຍໃນການດຳເນີນງານ ສຳລັບຫ້ອງການຜູ້ຕາງໜ້າ	29,332,341,661	16,727,100,609
ລາຍຈ່າຍຄ່າເຊົ່າ	6,689,100,886	6,177,427,842
ລາຍຈ່າຍຄ່າສ້ອມແປງ ແລະ ບຳລຸງຮັກສາ	5,103,178,682	5,112,044,595
ລາຍຈ່າຍຄ່າໂຄສະນາ	7,780,589,287	8,014,257,029
ລາຍຈ່າຍຄ່າຂົນສົ່ງ (ບົດອະທິບາຍຂໍ້ທີ 25.2)	16,157,215,996	15,410,597,633
ຄ່ານາຍໜ້າ	7,041,707,933	9,124,126,610

21. ຂາດທຶນຈາກອັດຕາແລກປ່ຽນ

ສ່ວນໃຫຍ່ປະກອບມີ ຂາດທຶນສຸດທິຈາກອັດຕາແລກປ່ຽນທີ່ເກີດຂຶ້ນຈິງຈາກບໍລິສັດໃນເຄືອ 86,965,295,672 ກີບ (2023: 76,001,592,945 ກີບ).

22. ລາຍຈ່າຍການເງິນ

ລາຍຈ່າຍນີ້ແມ່ນປະກອບດ້ວຍດອກເບ້ຍເງິນກູ້ຈາກພາກສ່ວນທີ່ກ່ຽວຂ້ອງ ເຊິ່ງລາຍຈ່າຍດອກເບ້ຍທີ່ເກີດພາຍໃນປີແມ່ນ 94,712,181,874 ກີບ (2023: 65,350,305,867 ກີບ) (ບົດອະທິບາຍຂໍ້ທີ 25.2) ແລະ ມາຈາກທະນາຄານການຄ້າຫ້ອງຖິ່ນ ຈຳນວນ 64,542,024,375 ກີບ (2023: 8,343,045,932 ກີບ)

23. ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນສະບັບເລກທີ 259 ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020, ບໍລິສັດໄດ້ຄິດໄລ່ອາກອນກຳໄລຈາກລາຍໄດ້ ອັດຕາ 20% (2023: 20%) ຫຼັງຈາກພິຈາລະນາລາຍຮັບ ແລະ ລາຍຈ່າຍທີ່ບໍ່ສາມາດຫັກອອກໄດ້ແມ່ນສອດຄ່ອງກັບກົດໝາຍ ວ່າດ້ວຍສ່ວຍສາອາກອນ.

ອາກອນກຳໄລຂອງປີສິ້ນສຸດວັນທີ 31 ທັນວາ 2024 ແມ່ນ 12,020,832,820 ກີບ (2023: 16,536,395,110 ກີບ).

24. ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນ ແມ່ນຄິດໄລ່ຈາກການແບ່ງກຳໄລສຸດທິໃຫ້ຜູ້ຖືຮຸ້ນດ້ວຍວິທີການສະເລ່ຍຂອງຈຳນວນຮຸ້ນສາມັນທີ່ອອກທັ້ງໝົດ.

	2024	2023
ກຳໄລສຸດທິຂອງຜູ້ຖືຮຸ້ນ (ກີບ)	176,052,728,293	11,858,664,868
ຈຳນວນຮຸ້ນ ສະເລ່ຍຕາມຮຸ້ນສາມັນທີ່ອອກທັ້ງໝົດ (ຮຸ້ນ)	235,000,000	235,000,000
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	749	50

ກຳໄລ ພື້ນຖານຕໍ່ຮຸ້ນຂອງ ຜູ້ຖືຮຸ້ນສ່ວນນ້ອຍ 1% ແມ່ນບໍ່ເປັນສາລະສຳຄັນ, ດັ່ງນັ້ນ ຈຶ່ງບໍ່ນຳສະເໜີເຂົ້າໃນເອກະສານລາຍງານການເງິນລວມກິດຈະການ.

25. ພາກສ່ວນທີ່ກ່ຽວຂ້ອງ

ນິຕິບຸກຄົນ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ພາຍໃຕ້ການຄວບຄຸມຂອງກຸ່ມບໍລິສັດ ລວມເຖິງການລົງທຶນໃນ ນິຕິບຸກຄົນ ແລະ ບຸກຄົນ ຫຼື ນິຕິບຸກຄົນ ມີອິດທິພົນຫຼາຍຕໍ່ກັບກຸ່ມບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງກຸ່ມບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງ ແມ່ນພິຈາລະນາເຖິງສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ພິຈາ ລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການທີ່ສຳຄັນລຸ່ມນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ:

25.1 ການຂາຍສິນຄ້າ ແລະ ບໍລິການ

	2024 ກີບ	2023 ກີບ
ຂາຍສິນຄ້າໃຫ້ແກ່:		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ນ້ຳມັນເຊື້ອໄຟ	19,223,279,252	12,832,709,960
ຂາຍບໍລິການໃຫ້ແກ່:		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ລາຍຮັບດອກເບ້ຍ	67,627,983,868	22,539,480,024
ຄ່າເຊົ່າ (ບົດອະທິບາຍຂໍ້ທີ 19)	15,228,087,840	4,642,993,069
ບໍລິການ ໄອທີ (ບົດອະທິບາຍຂໍ້ທີ 19)	-	704,882,893
	82,856,071,708	**27,887,355,986**

25. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

25.2 ການຊື້ສິນຄ້າ ແລະ ບໍລິການ

	2024 ກີບ	2023 ກີບ
ຊື້ບໍລິການຈາກ:		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ລາຍຈ່າຍດອກເບ້ຍ (ບົດອະທິບາຍຂໍ້ທີ 22)	99,193,124,132	65,350,305,867
ລາຍຈ່າຍຄ່າຂົນສົ່ງ (ບົດອະທິບາຍຂໍ້ທີ 20)	16,157,215,996	15,108,019,081
	115,350,340,128	**80,458,324,948**

25.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ / ຊື້ສິນຄ້າ / ບໍລິການ

	2024 ກີບ	2023 ກີບ
ໜີ້ຕ້ອງຮັບຈາກ:		
ໜີ້ຕ້ອງຮັບການຄ້າ (ບົດອະທິບາຍຂໍ້ທີ 5)		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ໜີ້ຕ້ອງຮັບການຄ້າ	36,635,703,971	26,364,428,435
	36,635,703,971	**26,364,428,435**
ຊັບສິນໝຸນວຽນອື່ນໆ (ບົດອະທິບາຍຂໍ້ທີ 7)		
ຜູ້ບໍລິຫານຫຼັກ		
ໜີ້ຕ້ອງຮັບອື່ນໆ ຈາກສ່ວນເກີນມູນຄ່າຮຸ້ນ	22,497,682,340	22,497,682,340
ໜີ້ຕ້ອງຮັບອື່ນໆ ຈາກການຂາຍພາຫະນະ	16,149,973,862	16,149,973,862
ໜີ້ຕ້ອງຮັບຈາກການປະກອບທຶນ	2,000,000,000	2,000,000,000
ເງິນລ່ວງໜ້າ ໃຫ້ຜູ້ບໍລິຫານ	74,236,566,354	8,780,669,991
ໜີ້ຕ້ອງຮັບ ດອກເບ້ຍ	35,392,406,567	21,250,004,771
	150,276,629,123	**70,678,330,964**
ພາກສ່ວນທີ່ກ່ຽວຂ້ອງ ອື່ນໆ		
ໜີ້ຕ້ອງຮັບ ດອກເບ້ຍ	80,197,364,718	36,139,508,536
ໜີ້ຕ້ອງຮັບອື່ນໆ ຈາກການບໍລິການຄ່າເຊົ່າ	35,797,499,949	18,968,787,119
ເງິນລ່ວງໜ້າ ໃຫ້ພາກສ່ວນທີ່ກ່ຽວຂ້ອງ	500,740,477,361	113,838,779,791
	616,735,342,028	**168,947,075,446**
ລວມ ໜີ້ຕ້ອງຮັບທັງໝົດ (ບົດອະທິບາຍຂໍ້ທີ 7)	**767,011,971,151**	**239,625,406,410**
ຊັບສິນບໍ່ໝຸນວຽນອື່ນໆ (ບົດອະທິບາຍຂໍ້ທີ 11)		
ຜູ້ບໍລິຫານຫຼັກ		
ຈ່າຍລ່ວງໜ້າ	34,419,839,505	34,419,839,505
	34,419,839,505	**34,419,839,505**

25. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

25.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ / ຊື້ສິນຄ້າ / ບໍລິການ (ຕໍ່)

	2024 ກີບ	2023 ກີບ
ໜີ້ຕ້ອງສົ່ງໃຫ້:		
ໜີ້ຕ້ອງສົ່ງການຄ້າ (ບົດອະທິບາຍຂໍ້ທີ 12)		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ	10,832,216,398	24,398,050,386
	10,832,216,398	**24,398,050,386**
ໜີ້ສິນໝຸນວຽນອື່ນໆ (ບົດອະທິບາຍຂໍ້ທີ 15)		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ		
ດອກເບ້ຍຄ້າງຈ່າຍ	651,967,812	617,961,630
ໜີ້ຕ້ອງສົ່ງອື່ນໆ	4,151,279,786	9,196,347,886
ລວມ ໜີ້ຕ້ອງສົ່ງທັງໝົດ (ບົດອະທິບາຍຂໍ້ທີ 15)	**4,803,247,598**	**9,814,309,516**

25.4 ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ

	2024 ກີບ	2023 ກີບ
ວັນທີ 1 ມັງກອນ	992,634,485,582	735,018,894,609
ເງິນກູ້ຢືມ ຮັບພາຍໃນປີ	642,859,681,710	902,496,252,956
ເງິນກູ້ຢືມ ໄດ້ຮັບຊຳລະຄືນພາຍໃນປີ	(729,751,404,292)	(814,863,550,421)
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	25,006,957,264	169,982,888,437
ວັນທີ 31 ທັນວາ	**930,749,720,264**	**992,634,485,581**

ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ ມີໄລຍະເວລາຊຳລະຄືນສະເພາະເຈາະຈົງ ແລະ ມີອັດຕາດອກເບ້ຍ 0%, 9%,10%,11% (2023: 0%, 9%,10% ຕໍ່ປີ) (ບົດອະທິບາຍຂໍ້ທີ 14).

25.5 ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ

	2024 ກີບ	2023 ກີບ
ວັນທີ 1 ມັງກອນ	328,092,964,732	257,955,822,779
ເງິນໃຫ້ກູ້ຢືມຈ່າຍ ພາຍໃນປີ	286,011,057,100	103,395,758,272
ເງິນໃຫ້ກູ້ຢືມຮັບຄືນ ພາຍໃນປີ	(216,012,172,000)	(51,841,508,000)
ກຳໄລຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	4,970,265,818	18,582,891,681
ວັນທີ 31 ທັນວາ	**403,062,115,650**	**328,092,964,732**

ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ ມີໄລຍະເວລາຊຳລະຄືນສະເພາະເຈາະຈົງ ແລະ ມີອັດຕາດອກເບ້ຍ 0%, 6.5%, 9%, 11%, 12%, 14% (2023: 0%, 6.5%, 9%, 10%, 12%) ຕໍ່ປີ.

25. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

25.6 ຄ່າຕອບແທນຂອງຜູ້ບໍລິຫານຫຼັກ

ຄ່າຕອບແທນຈ່າຍໃຫ້ຜູ້ບໍລິຫານຫຼັກມີດັ່ງລຸ່ມນີ້:

	2024 ກີບ	2023 ກີບ
ເງິນເດືອນ ແລະ ອື່ນໆ	9,895,492,157	5,069,019,742

26. ພາລະຜູກພັນ

ກ) ພາລະຜູກພັນສັນຍາເຊົ່າ - ທີ່ທາງກຸ່ມບໍລິສັດເປັນຜູ້ເຊົ່າ

ກຸ່ມບໍລິສັດເຊົ່າທີ່ດິນ ພາຍໃຕ້ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້.

ຈຳນວນເງິນທີ່ຕ້ອງຊຳລະພາຍໃຕ້ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້ ມີດັ່ງນີ້:

	2024 ກີບ	2023 ກີບ
ຕ່ຳກວ່າ 1 ປີ	18,038,886,750	13,803,810,750
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	24,986,350,300	26,177,551,000
ເກີນ 5 ປີ	18,590,445,358	30,212,721,538
	61,615,682,408	**70,194,083,288**

ຂ) ພາລະຜູກພັນສັນຍາເຊົ່າ - ທີ່ທາງກຸ່ມບໍລິສັດເປັນຜູ້ໃຫ້ເຊົ່າ

ກຸ່ມບໍລິສັດ ໄດ້ໃຫ້ເຊົ່າ ສະຖານີປ້ຳນ້ຳມັນ ແລະ ຫ້ອງການ ພາຍໃຕ້ ສັນຍາເຊົ່າໃນການດຳເນີນງານ. ໜີ້ຕ້ອງຮັບຄ່າເຊົ່າໃນອະນາຄົດຂັ້ນຕ່ຳ ໃນວັນທີ 31 ທັນວາ ພາຍໃຕ້ ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້ ມີດັ່ງນີ້:

	2024 ກີບ	2023 ກີບ
ຕ່ຳກວ່າ 1 ປີ	641,695,925	636,559,060
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	846,297,625	1,338,477,625
ເກີນ 5 ປີ	-	149,515,560
	1,487,993,550	**2,124,552,245**

27. ເຫດການທີ່ເກີດຂຶ້ນຫຼັງວັນທີບົດລາຍງານການເງິນ

ໃນວັນທີ 18 ກຸມພາ 2025, ທ່ານ ຈັນທອນ ສິດທິໄຊ - ຜູ້ອຳນວຍການ ແລະ ຜູ້ຖືຮຸ້ນລາຍໃຫຍ່ ໄດ້ຕົກລົງເຫັນດີແຕ່ງຕັ້ງ ທ່ານ ຄຳສອນ ສິດທິໄຊ - ຮອງຜູ້ອຳນວຍການ ຂຶ້ນເປັນ ຜູ້ອຳນວຍການ ເຊິ່ງມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ມີນາ 2025 ເປັນຕົ້ນໄປ.